ກົມການນຳເຂົ້າ ແລະ ສົ່ງອອກ
ກະຊວງອຸດສາຫະກຳ ແລະ ການຄ້າ

# ຄູ່ມືນຳໃຊ້

LTP
Lao PDR Trade Portal

# ສູນຂໍ້ມູນຂ່າວສານທາງດ້ານ ການຄ້າຂອງ ສປປ ລາວ



ສະໜັບສະໜູນໂດຍ:

Trade for Development
www.t4dlaos.org
TDF II

www.laotradeportal.gov.la
www.laotradeportal.org
www.laotradeportal.com

**ກະກຽມ ແລະ ຮຽບຮຽງໂດຍ**

**ຊີ້ນຳລວມ:**

| | |
|---|---|
| ທ່ານ ນາງ ບານສະຕິ ເທບພະວົງ | ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ເຂັດເດັດ ສີຫາວົງ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |

**ກະກຽມ ແລະ ຮຽບຮຽງ:**

| | |
|---|---|
| ທ່ານ ນາງ ລັດທະນາ ດວງບຸບຜາ | ຫົວໜ້າພະແນກອຳນວຍຄວາມສະດວກທາງດ້ານການຄ້າ |
| ທ່ານ ຄຳໃບ ສິດທິລາດວົງສາ | ຮອງຫົວໜ້າພະແນກອຳນວຍຄວາມສະດວກທາງດ້ານການຄ້າ |

**ອອກແບບ ແລະ ຈັດລຽງ:**

| | |
|---|---|
| ທ່ານ ສຸພາວົງ ວໍລະບຸດ | ວິຊາການ ພະແນກອຳນວຍຄວາມສະດວກທາງດ້ານການຄ້າ |

**ສາລະບານ**

**ຄຳນຳ** ........................................ 4

**1. ເນື້ອໃນເວັບໄຊທ໌** ........................................ 5

**2. ວິທີການເຂົ້າຫາເວັບໄຊທ໌** ........................................ 6

**2.1. ໜ້າຮັບຕ້ອນ (welcome page)** ........................................ 6

**2.2. ໜ້າຫຼັກ** ........................................ 7

**2.3. ເມນູໃນເວັບໄຊທ໌ ແລະ ອົງປະກອບຂອງເມນູ** ........................................ 8

2.3.1. ເມນູດ້ານເທິງສຸດ: ........................................ 8

2.3.2. ເມນູດ້ານເທິງຖັດລົງມາຈາກເມນູດ້ານເທິງສຸດ: ........................................ 8

2.3.3. ເມນູດ້ານຂ້າງ (ຂ້າງຂວາ): ........................................ 10

2.3.4. ເມນູດ້ານລຸ່ມສຸດ: ........................................ 10

**3. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານເທິງສຸດ** ........................................ 11

**3.1. ກ່ຽວກັບພວກເຮົາ** ........................................ 11

**3.2. ຕິດຕໍ່ສອບຖາມ ຫຼື ຕິດຕໍ່ພວກເຮົາ** ........................................ 12

**3.3. FAQ (ຄຳຖາມທີ່ມັກຖາມເລື້ອຍໆ)** ........................................ 13

**3.4. ເວັບໄຊ໌ທອື່ນໆ** ........................................ 13

**4. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານເທິງຖັດຈາກເມນູດ້ານເທິງສຸດ** ........................................ 14

**4.1. ກະດານຂ່າວ** ........................................ 14

4.1.1. ໜ້າຕ່າງເມນູຂ່າວ ຫຼື ເຄື່ອງມືຄົ້ນຫາຂ່າວ: ........................................ 15

4.1.2. ໜ້າຕ່າງເມນູປະກາດ ຫຼື ເຄື່ອງມືຄົ້ນຫາປະກາດ: ........................................ 16

**4.2. ເມນູຖານຂໍ້ມູນ** ........................................ 17

4.2.1. ເມນູຄົ້ນຫາອັດຕາພາສີ ........................................ 17

4.2.2. ເມນູຄົ້ນຫາ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ ........................................ 20

4.2.3. ເມນູຄົ້ນຫາ ແບບຟອມການນຳເຂົ້າ ແລະ ສົ່ງອອກ ........................................ 22

4.2.4. ເມນູຄົ້ນຫາ ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກ ........................................ 24

4.2.5. ເມນູຄົ້ນຫາ ມາດຕະການ, ມາດຕະຖານ ແລະ ຂໍ້ກຳນົດສະເພາະ ........................................ 26

**4.3. ເມນູເອກະສານການຄ້າ** ........................................ 29

4.3.1 ເມນູບົດຄວາມ........................................ 29

4.3.2. ເອກະສານສິ່ງພິມ ........................................ 30

4.3.3. ສັນຍາ ກ່ຽວກັບ ການອຳນວຍຄວາມສະດວກທາງດ້ານການຄ້າ........................................ 31

4.3.4. ສູນຂໍ້ມູນຂ່າວສານທາງດ້ານການຄ້າ ແຫ່ງຊາດ. ........................................ 31

**4.4. ຂໍ້ມູນກ່ຽວກັບການເຂົ້າສູ່ຕະຫລາດ** ........................................ 32

4.4.1. ໜ້າຕ່າງການຄ້າກັບສະມາຊິກອາຊຽນ: ........................................ 33

4.4.2. ໜ້າຕ່າງການຄ້າກັບສະຫະພາບເອີຣົບ: ........................................ 33

4.4.3. ໜ້າຕ່າງການຄ້າກັບປະເທດອື່ນໆ: ........................................ 34

4.4.4. ໜ້າຕ່າງການຄ້າຊາຍແດນ: ........................................ 34

**4.5. ສິດທິພິເສດດ້ານການຄ້າ**........................................ 34

4.5.1. ໜ້າຕ່າງເມນູສິດທິພິເສດດ້ານການຄ້າ........................................ 34

4.5.2. ໜ້າຕ່າງເມນູສິດທິພິເສດແບບໃຫ້ຝ່າຍດຽວ........................................ 35

4.5.3. ໜ້າຕ່າງເມນູເຂດການຄ້າເສລີ........................................ 36

4.5.4. ແບບຟອມສຳລັບຂໍ CO ........................................ 37

4.5.5. ຄຳຖາມທີ່ຖືກຖາມເລື້ອຍໆ (FAQ) ກ່ຽວກັບ ສິທິພິເສດທາງດ້ານການຄ້າ ........................................ 38

**5. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານຂ້າງ** ........................................ 38

**5.1. ເມນູກະດານສົນທະນາ**........................................ 38

**5.2. ການເຂົ້າເປັນສະມາຊິກ** ........................................ 39

5.2.1 ການສະໝັກເປັນສະມາຊິກ........................................ 40

5.2.2. ການເຂົ້າສູ່ລະບົບສະມາຊິກໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ........................................ 41

5.2.3. ນໍາໃຊ້ເຄື່ອງມື “ຕິດຕາມ (Follow)” ຂໍ້ມູນຂ່າວສານທີ່ມີການອັບເດດໃຫ່ມ ຜ່ານທາງອີເມລ ........... 41

**5.3. ການຄົ້ນຫາຂໍ້ມູນທັງໝົດໃນເວັບໄຊທ໌** .......... 43

**5.4. ລະບົບການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ທາງເອເລັກໂຕຣນິກ ຫຼື e-CO** .......... 44

**5.5. ໜ້າຈຸດສອບຖາມ SPS ແລະ TBT** .......... 45

**5.6. ຄູ່ມືນໍາເຂົ້າ ແລະ ສົ່ງອອກ** .......... 46

**5.7. ປະຕິທິນເຫດການ** .......... 47

**5.8. ເມນູເພີ່ມເຕີມດ້ານຂ້າງ** .......... 48

6. ການເຂົ້າຫາ ແລະ ວິທີນໍາໃຊ້ ກຸ່ມເມນູດ້ານລຸ່ມສຸດ .......... 49

**6.1. ແຜນຜັງຂອງເວັບໄຊທ໌** .......... 49

**6.2. ເມນູຄໍາສັບທົ່ວໄປ** .......... 50

**6.3. ຊ່ວຍເຫຼືອ** .......... 50

**6.4. ເງື່ອນໄຂການນໍາໃຊ້** .......... 51

**6.5. ເມນູຕິດຕໍ່ພວກເຮົາ:** .......... 51

**6.6. ສິ່ງຄໍາແນະນໍາ** .......... 52

ແບບຕົວຢ່າງຂອງການຄົ້ນຫາອັດຕາພາສີນໍາເຂົ້າຂອງສິນຄ້າປະເພດໃດໜຶ່ງ .......... 53

# ຄຳນຳ

ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ ຫຼື Lao PDR Trade Portal (LTP) ແມ່ນຈຸດບໍລິການປະຕູດຽວສຳລັບການສະໜອງຂໍ້ມູນຂ່າວສານ ທີ່ພົວພັນເຖິງ ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການນຳສິນຄ້າຜ່ານແດນ ຂອງ ສປປ ລາວ ໂດຍຜ່ານລະບົບເອເລັກໂຕຣນິກ ຊຶ່ງມີທີ່ຕັ້ງຢູ່ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ເປັນຕົວແທນໃຫ້ແກ່ ບັນດາອົງການຈັດຕັ້ງຂອງລັດຖະບານ ທີ່ມີສ່ວນຮ່ວມໃນການອະນຸຍາດນຳເຂົ້າ, ສົ່ງອອກ, ແລະ ຜ່ານແດນ. LTP ສະໜອງຂໍ້ມູນຂ່າວສານກ່ຽວກັບ ກົດໝາຍ, ລັດຖະດຳລັດ, ດຳລັດ, ຄຳສັ່ງແນະນຳ, ຂໍ້ຕົກລົງ, ແຈ້ງການ, ລະບຽບການ, ຂັ້ນຕອນ ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການນຳສິນຄ້າຜ່ານແດນ ຂອງ ສປປ ລາວ, ແລະ ຂໍ້ມູນກ່ຽວກັບອັດຕາພາສີນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວ. ພ້ອມນັ້ນ, ຍັງມີຂໍ້ມູນກ່ຽວກັບການເຂົ້າສູ່ຕະຫຼາດສົ່ງອອກຫຼັກ ຂອງ ສປປ ລາວ ຈຳນວນໜຶ່ງອີກດ້ວຍ. ນອກຈາກນີ້, ກໍ່ຍັງເປັນເຄື່ອງມືໃນການສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ຜູ້ດຳເນີນທຸລະກິດການຄ້າ ໃຫ້ສາມາດພົວພັນກັບໜ່ວຍງານຕ່າງໆຂອງລັດຖະບານ ທີ່ບໍລິຫານຄຸ້ມຄອງການນຳເຂົ້າ-ສົ່ງອອກ ແລະ ການນຳສິນຄ້າຜ່ານ ໄດ້ໂດຍກົງ.

LTP ໄດ້ຮັບການພັດທະນາ ແລະ ສ້າງຕັ້ງຂຶ້ນ ບໍ່ພຽງແຕ່ເພື່ອປະຕິບັດຂໍ້ຜູກພັນຂອງລັດຖະບານລາວໃນການສ້າງຄວາມໂປ່ງໃສທາງດ້ານຂໍ້ມູນຂ່າວສານດ້ານການຄ້າ ໃນຂອບພາກພື້ນ ກໍ່ຄື ມາດຕາ 13 ຂອງ ATIGA ແລະ ໃນຂອບສາກົນ ກໍ່ຄື ມາດຕາ X ຂອງ GATT ແຕ່ຍັງເປັນການຈັດຕັ້ງປະຕິບັດນະໂຍບາຍຂອງ ລັດຖະບານ ແຫ່ງ ສປປ ລາວ ໃນການສ້າງສິ່ງແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການດຳເນີນທຸລະກິດການຄ້າ ແນໃສ່ເພື່ອເຮັດໃຫ້ຂັ້ນຕອນດຳເນີນການຄ້າ ມີຄວາມງ່າຍດາຍຂຶ້ນ ແລະ ເພີ່ມທະວີຄວາມໂປ່ງໃສຂອງນິຕິກຳ. LTP ໄດ້ຮັບການພັດທະນາຂຶ້ນໂດຍການປະສານສົມທົບ ລະຫວ່າງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ບັນດາກະຊວງ ຂະແໜງການທີ່ກ່ຽວຂ້ອງ ພາຍໃຕ້ທຶນສະໜັບສະໜູນຈາກ ກອງທຶນຊ່ວຍເຫຼືອລ້າຫຼາຍຝ່າຍເພື່ອການພັດທະນາທາງດ້ານການຄ້າ ຫຼື Trade Development Facility (TDF).

ພວກເຮົາເຫັນໄດ້ຄວາມສຳຄັນ ຂອງການສ້າງປຶ້ມຄູ່ມືນຳໃຊ້ສະບັບນີ້ ເພື່ອນຳຜົນປະໂຫຍດມາສູ່ສາທາລະນະຊົນ, ໂດຍສະເພາະແມ່ນຜູ້ປະກອບການ ນຳເຂົ້າ-ສົ່ງອອກ, ນັກຮຽນ-ນັກສຶກສາ, ນັກຄົ້ນຄວ້າ, ພະນັກງານ ແລະ ລັດຖະກອນ. ປຶ້ມຄູ່ມືສະບັບນີ້ແມ່ນໄດ້ຮັບການປັບປຸງມາຈາກສະບັບຈັດພິມຄັ້ງທີໜຶ່ງ, ຈຸດປະສົງແມ່ນເພື່ອໃຫ້ຄຳແນະນຳໂດຍຫຍໍ້ ກ່ຽວກັບ ວິທີເຂົ້ານຳໃຊ້ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ ໂດຍໃຊ້ຮູບພາບປະກອບ ອະທິບາຍດ້ວຍຄຳສັບທີ່ເຂົ້າໃຈງ່າຍ ຊຶ່ງຈະຊ່ວຍໃຫ້ຜູ້ນຳໃຊ້ສາມາດນຳໄປສຶກສາດ້ວຍຕົນເອງກໍ່ໄດ້. ນອກຈາກນີ້ ປຶ້ມຄູ່ມືນີ້ ກໍຍັງສາມາດນຳໄປໃຊ້ ເພື່ອເປັນເຄື່ອງມືໃນການສິດສອນ ແລະ ຝຶກອົບຮົມ ໃຫ້ແກ່ຜູ້ອື່ນໆໃນສັງຄົມ ທີ່ມີຄວາມສົນໃຈ.

ພວກເຮົາຫວັງຢ່າງຍິ່ງວ່າ ປຶ້ມຄູ່ມືເຫຼັ້ມນີ້ ຈະເປັນປະໂຫຍດໃຫ້ແກ່ຜູ້ຊົມໃຊ້ ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ ບໍ່ຫຼາຍກໍ່ໜ້ອຍ. ຖ້າຫາກວ່າທ່ານໃດ ມີຂໍ້ຕຳນິຕິຊົມ ແລະ ສະເໜີແນະ ກ່ຽວກັບເນື້ອໃນ ຫຼື ການຈັດລຽງຂອງປຶ້ມຫົວນີ້ ພວກເຮົາມີຄວາມຍິນດີຮັບເອົາ ເພື່ອສືບຕໍ່ປັບປຸງ ປຶ້ມຄູ່ມືນີ້ ໃຫ້ມີປະສິດທິຜົນສູງສຸດ.

ນະຄອນຫຼວງວຽງຈັນ, ວັນທີ 16 ກັນຍາ 2016

ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

ນ.ບານສະດີ ເທບພະວົງ

## 1. ເນື້ອໃນເວັບໄຊທ໌

ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (LTP) ປະກອບມີ 02 ພາສາ, ທັງພາສາລາວ ແລະ ພາສາອັງກິດ ແລະ ມີເນື້ອໃນດັ່ງນີ້:

- ❖ ອັດຕາພາສີນຳເຂົ້າຂອງແຕ່ລະປະເພດສິນຄ້າ: ສປປ ລາວ ໄດ້ຈັດເປັນໝວດສິນຄ້າໂດຍການໃຊ້ລະບົບລະຫັດອັດຕາພາສີເອກະພາບ HS CODE ເຊິ່ງສອດຄ່ອງກັບລະບົບຈຳແນກອັດຕາພາສີຂອງອາຊຽນ (AHTN 2012). ໂດຍການໃຊ້ລະບົບຄົ້ນຫາໃນເວັບໄຊທ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ. ທ່ານສາມາດເບິ່ງຂໍ້ມູນອັດຕາພາສີທີ່ຖືກນຳໃຊ້ປະຈຸບັນ ສຳລັບສິນຄ້າແຕ່ລະປະເພດເຊັ່ນ: ອັດຕາພາສີ MFN (ການປະຕິບັດແບບອະນຸເຄາະຍິ່ງ ຫຼື ເອີ້ນວ່າອັດຕາພາສີທົ່ວໄປ) ແລະ ອັດຕາ ATIGA (ອັດຕາພາສີພາຍໃຕ້ສັນຍາການຄ້າດ້ານສິນຄ້າ ຂອງ ອາຊຽນ).

  ນອກຈາກນັ້ນ ທ່ານຍັງສາມາດຊອກຫາອັດຕາພາສີ ທີ່ຖືກນຳໃຊ້ກັບບັນດາປະເທດທີ່ ສປປ ລາວ ມີສັນຍາການຄ້າເສລີ (FTA) ໃນຂອບ ASEAN-China, ASEAN-Japan, ASEAN-Korea, ASEAN-Australia / New Zealand ແລະ ASEAN- India.

- ❖ ບັນດານິຕິກຳ: ປະກອບດ້ວຍ ກົດໝາຍ, ລັດຖະດຳລັດ, ດຳລັດ, ຄຳສັ່ງແນະນຳ, ຂໍ້ຕົກລົງ, ແຈ້ງການ, ຂໍ້ກຳນົດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການຄ້າຜ່ານແດນ.

- ❖ ຂັ້ນຕອນການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການຄ້າຜ່ານແດນ: ໃນການນຳເຂົ້າ-ສົ່ງອອກ ແລະ ການຄ້າຜ່ານແດນແຕ່ລະປະເພດສິນຄ້າ ມີຂັ້ນຕອນການທີ່ແຕກຕ່າງກັນ ຂຶ້ນກັບປະເພດສິນຄ້າທີ່ຈະນຳເຂົ້າ ຫຼື ສົ່ງອອກ. ເມື່ອທ່ານກົດເຂົ້າໄປເບິ່ງສິນຄ້າແຕ່ລະປະເພດຕາມຊື່ ແລະ ລະຫັດ HS Code ທ່ານຈະເຫັນແຜນວາດປະກອບອະທິບາຍຂັ້ນຕອນການນຳເຂົ້າ, ສົ່ງອອກ ແລະ ຜ່ານແດນ.

- ❖ ມາດຕະການ: ຂໍ້ກຳນົດສະເພາະໃດໜຶ່ງທີ່ມີຜົນຕໍ່ກັບສິນຄ້າໃດໜຶ່ງ ຫຼື ສິນຄ້າ ປະເພດໃດໜຶ່ງ. ໂດຍປົກກະຕິມາດຕະການ ອາດຈະກ່ຽວພັນກັບລະບຽບ ສຸຂານາໄມ ແລະ ສຸຂານາໄມພືດ (SPS). ໃນກໍລະນີນີ້ ແມ່ນສາມາດດຳເນີນການຂໍອະນຸຍາດຈາກພາກລັດທີ່ກ່ຽວຂ້ອງກ່ອນການນຳເຂົ້າ, ສົ່ງອອກ ຫຼື ນຳສິນຄ້າຜ່ານແດນ.

- ❖ ຄູ່ມືນຳເຂົ້າ ແລະ ສົ່ງອອກ ນຳໃຊ້ພາສາທີ່ເຂົ້າໃຈງ່າຍເພື່ອແນະນຳ ກ່ຽວກັບ ການນຳເຂົ້າ, ການສົ່ງອອກ ແລະ ການນຳສິນຄ້າຜ່ານແດນ ສປປ ລາວ ໃຫ້ແກ່ຜູ້ດຳເນີນການຄ້າ, ຕົວແທນແລ່ນເອກະສານ ແລະ ຜູ້ປະກອບການດ້ານການຂົນສົ່ງ.

- ❖ ຂໍ້ມູນອື່ນໆ: ທ່ານຍັງສາມາດເຫັນຂ່າວຫຼ້າສຸດ, ປະກາດ, ສິ່ງພິມ ທີ່ກ່ຽວກັບການຄ້າ.

## 2. ວິທີການເຂົ້າຫາເວັບໄຊທ໌

ກ່ອນອື່ນຫມົດໃຫ້ທ່ານກົດໃສ່ໂປຣແກຣມເວັບບຣາວເຊີໃດໜຶ່ງ ດັ່ງ 05 icon ດ້ານລຸ່ມຄື: Google Chrome, Mozilla Firefox, Internet Explorer, Safari ຫຼື Opera. ໃນນີ້ພວກເຮົາຂໍແນະນຳໃຫ້ທ່ານໃຊ້ Google Chrome ເຊິ່ງໂປຣແກຣມເວັບບຣາວທີ່ຂ້ອນຂ້າງໄວ, ເມື່ອເປີດຂຶ້ນມາ ແລ້ວພິມຊື່ເວັບໄຊທ໌ www.laotradeportal.gov.la ໃສ່ຊ່ອງ address bar ຂອງໂປຣແກຣມເວັບບຣາວເຊີ ແລ້ວຈະນຳທ່ານເຂົ້າຫາໜ້າຮັບຕ້ອນຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຊຶ່ງມີຮູບສະແດງດັ່ງນີ້:




1

ກົດໃສ່ icon ເວັບບຣາວເຊີໂຕໃດໂຕໜຶ່ງທີ່ມີໃນຄອມພິວເຕີ ເພື່ອເປີດໂປຣແກຣມ

### 2.1. ໜ້າຮັບຕ້ອນ (welcome page)

ພາຍຫຼັງທີ່ເປີດໂປຣແກຣມເວັບບຣາວແລ້ວ, ຫຼັງຈາກນັ້ນໃຫ້ພິມຊື່ເວັບໄຊທ໌ www.laotradeportal.gov.la ຫຼື www.laotradeportal.com ຫຼື www.laotradeportal.org ໃສ່ຊ່ອງ address bar ຕາມຂັ້ນຕອນທີ 02 ແລ້ວກົດອິນເຕີ




ຈາກນັ້ນທ່ານກໍ່ຈະເຫັນໜ້າຮັບຕ້ອນຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ.

2

ປ້ອນຊື່ ເວັບໃສ່ບ່ອນນີ້ (www.laotradeportal.gov.la, ຫຼື www.laotradeportal.com, www.laotradeportal.org )




ກົດປຸ່ມເລືອກພາສາລາວ ຫຼື ພາສາອັງກິດ ທີ່ທ່ານຕ້ອງການໃຫ້ສະແດງຜົນໃນຫນ້າເວັບ ຕາມຂັ້ນຕອນທີ 03. ຫຼັງຈາກນັ້ນທ່ານຈະເຂົ້າສູ່ໜ້າຫຼັກຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ.

## 2.2. ໜ້າຫຼັກ.

ເມື່ອທ່ານເຂົ້າມາສູ່ໜ້າຫຼັກຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ທ່ານຈະສາມາດເລືອກເສັ້ນທາງເຂົ້າຫາຂໍ້ມູນຕ່າງໆໄດ້ຢ່າງງ່າຍດາຍ ດັ່ງພາບປະກອບດ້ານລຸ່ມນີ້:



## ເມນູໃນເວັບໄຊທ໌ ແລະ ອົງປະກອບຂອງເມນູ

ໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ປະກອບມີ ກຸ່ມເມນູເຊິ່ງໄດ້ຈັດສັນໄວ້ໃນແຕ່ລະສ່ວນຂອງເວັບໄຊທ໌ດັ່ງນີ້

**ເມນູດ້ານເທິງສຸດ**

**ເມນູດ້ານເທິງຖັດລົງມາຈາກເມນູດ້ານເທິງສຸດ**

**ເມນູດ້ານຂ້າງ**

**ເມນູດ້ານລຸ່ມສຸດ**

## ເມນູດ້ານເທິງສຸດ




1. ກ່ຽວກັບພວກເຮົາ
2. ຕິດຕໍ່ສອບຖາມ
3. ຄຳຖາມທີ່ຖືກຖາມປະຈຳ (
4. ຂໍ້ມູນເປັນປະໂຫຍດອື່ນໆ

ວິທີນຳໃຊ້ກຸ່ມເມນູດ້ານເທິງສຸດໃຫ້ໄປເບິ່ງໃນຂໍ້ທີ ໜ້າທີ

## ເມນູດ້ານເທິງຖັດລົງມາຈາກເມນູດ້ານເທິງສຸດ




1. ໜ້າຫຼັກ
2. ກະດານຂ່າວ →
   - ຂ່າວ
   - ປະກາດ
3. ຖານຂໍ້ມູນ →
   - ຄົ້ນຫາສິນຄ້າ
   - ຄົ້ນຫານິຕິກຳ
   - ຄົ້ນຫາແບບຟອມ
   - ຄົ້ນຫາຂັ້ນຕອນ
   - ມາດຕະການ, ມາດຕະຖານ ແລະ ຂໍ້ກຳນົດ
4. ເອກະສານການຄ້າ →
   - ບົດຄວາມ
   - ເອກະສານສິ່ງພິມ
   - ສັນຍາການ ອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ການຂົນສົ່ງ
   - ສູນຂໍ້ມູນຂ່າວສານທາງດ້ານການຄ້າ ແຫ່ງຊາດ (NTR)

ວິທີນຳໃຊ້ກຸ່ມເມນູດ້ານເທິງຖັດລົງມາຈາກເມນູດ້ານເທິງສຸດໃຫ້ໄປເບິ່ງໃນຂໍ້ທີ ໜ້າທີ

5 ຂໍ້ມູນເຂົ້າສູ່ຕະຫຼາດ →

- ການຄ້າກັບສະມາຊິກອາຊຽນ
- ການຄ້າກັບສະຫາພັນເອີຣົບ
- ການຄ້າກັບປະເທດອື່ນໆ
- ການຄ້າຊາຍແດນ

6 ສິດທິພິເສດທາງດ້ານການຄ້າ →

- ສິດທິພິເສດດ້ານການຄ້າ
- ສິດທິພິເສດແບບໃຫ້ຝ່າຍດຽວ
  - ສະຫະພາບເອີຣົບ
  - ອົດສະຕາລີ
  - ນິວຊີແລນ
  - ສະວິດເຊີແລນ
  - ການາດາ
  - ນໍເວ
  - ຕວກກີ
  - ຣັດເຊຍ, ເບລາຣຸສ ແລະ ກາຊັກສະຖານ
  - ອິນເດຍ
  - ຍີ່ປຸ່ນ
  - ສ. ເກົາຫຼີ
  - ຈີນໄຕ້ຫວັນ
  - ຫວຽດນາມ
- ເຂດການຄ້າເສລີ
- ແບບຟອມສຳລັບຂໍ CO
- ຄຳຖາມທີ່ມັກຖາມເລື້ອຍໆ

7 **ເລືອກພາສາ:** ປຸ່ມສຳລັບປ່ຽນພາສາ ລະຫວ່າງພາສາລາວ ແລະ ອັງກິດ →  ແລະ 

ວິທີນຳໃຊ້ກຸ່ມເມນູດ້ານເທິງຖັດລົງ
ມາຈາກເມນູດ້ານເທິງສຸດໃຫ້ໄປ
ເບິ່ງໃນຂໍ້ທີ   ໜ້າທີ

## ເມນູດ້ານຂ້າງ ຂ້າງຂວາ

1. ກະດານສົນທະນາ
2. ພື້ນທີ່ສຳລັບສະມາຊິກ
3. ຄົ້ນຫາຂໍ້ມູນທັງໝົດເວັບໄຊທ໌
4. ເມນູເຂົ້າຫາ ລະບົບ
5. ເມນູ ແລະ
6. ເມນູ ຄູ່ມືນຳເຂົ້າ ແລະ ສົ່ງອອກ
7. ເຫດການທີ່ຈະມາເຖິງ
8. ປະກາດຮັບພະນັກງານ
9. ສະແດງຄວາມຄິດເຫັນ
10. ອັດຕາແລກປ່ຽນ
11. ຟ້ອນພາສາລາວ
12. ວິດີໂອ ແລະ ເຟສບຸກ ຂອງ




ວິທີນຳໃຊ້ກຸ່ມເມນູດ້ານຂ້າງໃຫ້ໄປ
ເບິ່ງໃນຂໍ້ທີ ໜ້າທີ

## ເມນູດ້ານລຸ່ມສຸດ




1. ແຜນຜັງເວັບໄຊທ໌
2. ຄຳສັບທົ່ວໄປ
3. ເງື່ອນໄຂ
4. ຕິດຕໍ່ພວກເຮົາ
5. ສິ່ງຄຳແນະນຳ
6. ຊ່ວຍເຫຼືອ

ວິທີນຳໃຊ້ກຸ່ມເມນູດ້ານຂ້າງໃຫ້ໄປ
ເບິ່ງໃນຂໍ້ທີ ໜ້າທີ

## 3. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານເທິງສຸດ

### 3.1. ກ່ຽວກັບພວກເຮົາ

ໜ້ານີ້ແນະນຳໂດຍຫຍໍ້ ກ່ຽວກັບ ກະຊວງ ແລະ ພາກສ່ວນກ່ຽວຂ້ອງ ທີ່ເຜີຍແຜ່ຂໍ້ມູນຂ່າວສານລົງໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ພ້ອມກັບລິ້ງ (link) ເຖິງເວັບໄຊທ໌ຂອງພາກສ່ວນດັ່ງກ່າວ. ຂັ້ນຕອນການເຂົ້າຫາເມນູດັ່ງກ່າວມີດັ່ງລຸ່ມນີ້:



## 3.2. ຕິດຕໍ່ສອບຖາມ ຫຼື ຕິດຕໍ່ພວກເຮົາ

ໜ້ານີ້ອະນຸຍາດໃຫ້ປ້ອນຄຳຖາມໃສ່ໃນແບບຟອມ, ເວັບໄຊທ໌ຈະສົ່ງຄຳຖາມໃຫ້ໜ່ວຍງານຕ່າງໆທີ່ກ່ຽວຂ້ອງ ອີງຕາມການເລືອກປະເພດທີ່ກຳນົດໄວ້ໃຫ້. ການຂຽນຫົວຂໍ້ທີ່ຈະແຈ້ງຈະຊ່ວຍໃຫ້ສາມາດສົ່ງຄຳຖາມຫາພາກສ່ວນທີ່ຮັບຜິດຊອບໄດ້ຖືກຕ້ອງ.



## 3.3. FAQ (ຄຳຖາມທີ່ມັກຖາມເລື້ອຍໆ)

ໃນໜ້ານີ້, ຄຳຖາມທີ່ຖືກຖາມເຂົ້າມາຜ່ານສູນຂໍ້ມູນຂ່າວສານທາງດ້ານການຄ້າຢ່າງເປັນປະຈຳ ໂດຍສາທາລະນະຊົນຈະຖືກເກັບໄວ້ ແລະ ຈັດປະເພດພ້ອມກັບຄຳຕອບ. ສະນັ້ນ, ຖ້າທ່ານຕ້ອງການຖາມຄຳຖາມເຂົ້າມາຜ່ານສູນຂໍ້ມູນຂ່າວ ສານທາງດ້ານການຄ້າຂອງ ສປປ ລາວ ຂໍແນະນຳໃຫ້ທ່ານກວດເບິ່ງໜ້ານີ້ກ່ອນ ເພາະຄຳຖາມຂອງທ່ານອາດມີຄຳຕອບລະບຸໄວ້ໃນນີ້ແລ້ວ.

2 ແລ້ວຈະເຂົ້າຫາໜ້າ FAQ ດັ່ງລຸ່ມນີ້:

1 ກົດເຂົ້າທີ່ ຖາມຕອບ ໃນເມນູຫຼັກ




## 3.4. ເວັບໄຊທ໌ອື່ນໆ

ເມນູນີ້ຈະຊ່ວຍພາທ່ານເຂົ້າຫາເວັບໄຊທ໌ອື່ນໆ ທີ່ຕິດພັນກັບວຽກງານການຄ້າ ພຽງແຕ່ທ່ານປະຕິບັດດັ່ງນີ້:



# 4. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານເທິງຖັດຈາກເມນູດ້ານເທິງສຸດ

## 4.1. ກະດານຂ່າວ

ກະດານຂ່າວລວມມີ ເມນູປະກາດ ແລະ ເມນູຂ່າວ ເຊິ່ງສາມາດເຂົ້າຫາໄດ້ 02 ທາງ ໂດຍການເຂົ້າຫາເມນູດ້ານເທິງທີ່ເປັນ ກຸ່ມເມນູຫຼັກ ແລະ ຫນ້າທຳອິດຂອງເວັບໄຊທ໌ ດັ່ງຮູບລຸ່ມນີ້ ຢູ່ໜ້າທຳອິດສະແດງໃຫ້ເຫັນປະກາດຫຼ້າສຸດ ແລະ ຂ່າວຫຼ້າສຸດ, ສ່ວນຂ່າວ ແລະ ປະກາດ ທັງໝົດທີ່ມີໃນສູນຂໍ້ມູນຂ່າວສານ ສາມາດເຂົ້າເບິ່ງໄດ້ຈາກການກົດເມນູຂ່າວ ແລະ ປະກາດ ຢູ່ເມນູເບື້ອງເທິງດັ່ງຮູບພາບປະກອບ.



### 4.1.1. ໜ້າຕ່າງເມນູຂ່າວ ຫຼື ເຄື່ອງມືຄົ້ນຫາຂ່າວ:

ບົດຂ່າວທີ່ນຳມາເຜີຍແຜ່ໂດຍລວມແມ່ນກ່ຽວກັບການເຄື່ອນໄຫວຕ່າງໆທີ່ຕິດພັນກັບວຽກງານການຄ້າ ແລະ ຂ່າວສານກ່ຽວກັບຂໍ້ມູນເຂົ້າສູ່ຕະຫຼາດ ກໍ່ຄືລະບຽບການນຳເຂົ້າ ແລະ ສົ່ງອອກຂອງບັນດາປະເທດທີ່ ສປປ ລາວ ເປັນພາຄີ. ວິທີການຄົ້ນຫາຂ່າວສານສະແດງດັ່ງນີ້:



## 4.1.2. ໜ້າຕ່າງເມນູປະກາດ ຫຼື ເຄື່ອງມືຄົ້ນຫາປະກາດ:

ປະກາດໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ແມ່ນຈະເນັ້ນໃສ່ການແຈ້ງໃຫ້ຜູ້ຊົມໃຊ້ຮັບຊາບເຖິງການປະກາດໃຊ້ນິຕິກຳໃໝ່ທີ່ຕິດພັນກັບວຽກງານການຄ້າໃນ ສປປ ລາວ ໂດຍສະເພາະແມ່ນການນຳເຂົ້າ ແລະ ສົ່ງອອກ. ວິທີການຄົ້ນຫາຂ່າວສານສະແດງດັ່ງນີ້:



## 4.2. ເມນູຖານຂໍ້ມູນ

### 4.2.1. ເມນູຄົ້ນຫາອັດຕາພາສີ

ສູນຂໍ້ມູນຂ່າວສານທາງດ້ານການຄ້າບັນຈຸ ຕາຕະລາງສິນຄ້າ ທີ່ຖືກຈັດເປັນໝວດໂດຍມີລະຫັດພາສີ HS Code ທີ່ສອດຄ່ອງກັບລະບົບຈຳແນກອັດຕາພາສີຂອງ ອາຊຽນ AHTN (ASEAN Harmonized Tariff Nomenclature) ທັງໝົດຖືກເກັບໄວ້ໃນຖານຂໍ້ມູນຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ.

ຂໍ້ມູນດັ່ງກ່າວລວມມີ ອັດຕາພາສີພື້ນຖານ MFN (ການປະຕິບັດຕໍ່ຊາດທີ່ໄດ້ຮັບອະນຸເຄາະຍິ່ງ) ຊຶ່ງຖືກນຳໃຊ້ຕໍ່ການນຳເຂົ້າຈາກທຸກປະເທດໃນໂລກ ແລະ ATIGA (ອັດຕາພາສີໃນຂອບອາຊຽນ) ຊຶ່ງຖືກນຳໃຊ້ໃນເວລາມີການນຳເຂົ້າຈາກບັນດາປະເທດສະມາຊິກອາຊຽນດ້ວຍກັນ. ພ້ອມນັ້ນ, ກໍ່ຍັງມີອັດຕາພາສີສົ່ງອອກສຳລັບບາງລາຍການສິນຄ້າ. ນອກຈາກອັດຕາພາສີນຳເຂົ້າ ແລະ ສົ່ງອອກຂອງ ສປປ ລາວ ແລ້ວ ທ່ານຍັງສາມາດຊອກຮູ້ມາດຕະການ ແລະ ຂັ້ນຕອນນຳເຂົ້າ ຈາກການຄົ້ນຫາອັດຕາພາສີ ຄືດັ່ງຮູບສະແດງລຸ່ມນີ້:



**ອະທິບາຍ:**

**- ຂັ້ນຕອນ 3:** ຫຼັງຈາກທີ່ເຂົ້າມາຮອດໜ້າຄົ້ນຫາອັດຕາພາສີແລ້ວ ໃຫ້ທ່ານເລືອກການຄົ້ນຫາວ່າທ່ານຈະຄົ້ນ. ຫາສິນຄ້າດ້ວຍ ລະຫັດພາສີ HS Code ທີ່ເປັນລະຫັດສອງຕົວເລກຂຶ້ນໄປ ບໍ່ວ່າຈະເປັນ 2,4,6 ຫຼື 8 ຕົວເລກ ກໍ່ ໃຫ້ເລືອກຕິກເອົາ. "**HSCODE**" ຫຼື ຄົ້ນຫາອັດຕາພາສີດ້ວຍຊື່ສິນຄ້າ, ຄຳສັບກ່ຽວຂ້ອງກັບສິນຄ້າ, ຄຳອະທິບາຍ ສິນຄ້າ ແມ່ນໃຫ້ທ່ານເລືອກຕິກເອົາ "**ລາຍລະອຽດ**".

**- ຂັ້ນຕອນ 4:** ແມ່ນໃຫ້ພິມສິ່ງທີ່ທ່ານຕ້ອງການຄົ້ນຫາລົງໃນຊ່ອງການຄົ້ນຫາ ຖ້າໃນຂັ້ນຕອນ 3 ທ່ານເລືອກຕິກເປັນ "**HSCODE**" ແມ່ນໃຫ້ພິມລະຫັດຂອງສິນຄ້າລົງໄປ, ແຕ່ຖ້າທ່ານເລືອກ ເປັນ "**ລາຍລະອຽດ**" ແມ່ນໃຫ້ທ່ານພິມເປັນຕົວໜັງສືລົງໃນຊ່ອງຄົ້ນຫາ ເຊັ່ນວ່າ ຊື່ສິນຄ້າ, ຄຳສັບ ຫຼື ປະໂຫຍກຄຳເວົ້າກ່ຽວກັບສິນຄ້າ (ສຳລັບໜ້າພາສາລາວໃຫ້ພິມເປັນພາສາລາວ ແລະ ໜ້າພາສາອັງກິດ ໃຫ້ພິມເປັນພາສາອັງກິດ).

**- List all**: ໃນກໍລະນີທ່ານບໍ່ຮູ້ລະຫັດ HSCODE ແລະ ບໍ່ຮູ້ວ່າສິນຄ້າທີ່ທ່ານຕ້ອງການຄົ້ນຫານັ້ນຂຽນຄືແນວໃດ ຫຼື ຕ້ອງການເຫັນຂໍ້ມູນສິນຄ້າທັງໝົດແມ່ນໃຫ້ທ່ານກົດທີ່ "**List all**".




ຜົນຂອງການຄົ້ນຫາ ດ້ວຍຕົວຢ່າງ ລະຫັດສິນຄ້າ "87" ຂັ້ນຕອນຕໍ່ໄປໃຫ້ທ່ານເລືອກສິນຄ້າທີ່ທ່ານຕ້ອງການຄົ້ນຫາເພື່ອເຂົ້າເບິ່ງລາຍລະອຽດ

ນອກຈາກອັດຕາພາສີນຳເຂົ້າ ຂອງ ສປປ ລາວ ໃນຂອບສັນຍາ ATIGA ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ຍັງສະໜອງຂໍ້ມູນກ່ຽວກັບ ອັດຕາພາສີຂອງ ສປປ ລາວ ທີ່ໃຊ້ໃນຂອບອາຊຽນກັບປະເທດຄູ່ເຈລະຈາຄື: ອາຊຽນ-ເກົາຫຼີ, ອາຊຽນ-ຍີ່ປຸ່ນ, ອາຊຽນ-ອົດສະຕາລີ-ນິວຊີແລນ, ອາຊຽນ-ຈີນ ແລະ ອາຊຽນ-ອິນເດຍ ຊຶ່ງເປັນຕາຕະລາງອັດຕາພາສີທີ່ມີການຫຼຸດລົງຕາມໄລຍະເວລາໃນຮູບແບບຂອງ PDF. ທ່ານສາມາດເບິ່ງຂັ້ນຕອນການເຂົ້າຫາອັດຕາພາສີດັ່ງກ່າວໄດ້ທີ່ *ຂໍ້ 4.5.3 ໜ້າຕ່າງເມນູເຂດການຄ້າເສລີ (ໜ້າ 36)*.




### 4.2.2. ເມນູຄົ້ນຫາ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ

ສິ່ງສຳຄັນອີກຢ່າງໜຶ່ງຂອງສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ ແມ່ນການເຜີຍແຜ່ກົດໝາຍ, ລະບຽບການ, ຄຳສັ່ງ, ແຈ້ງການ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບການຄ້າ. ໃນສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ, ເນື້ອໃນນິຕິກຳຕ່າງໆ (ທັງພາສາລາວ ແລະ ອັງກິດ) ແມ່ນສາມາດຄົ້ນຫາແລະ ອ້າງອີງໄດ້ຈາກແຫຼ່ງອື່ນໆໃນເວັບໄຊທ໌.

ຜູ້ເຂົ້ານຳໃຊ້ ສາມາດຄົ້ນຫາເອກະສານນິຕິກຳຕ່າງໆ ໂດຍພິມຄຳໃດໜຶ່ງແບບປະສົມປະສານ ເຊັ່ນ ໂດຍການເລືອກປະເພດຂອງເອກະສານ (ຕົວຢ່າງ: ກົດໝາຍ, ດຳລັດ, ຄຳສັ່ງ ແລະ ອື່ນໆ), ຂະແໜງການທີ່ວາງອອກ, ຂະແໜງການທີ່ເບິ່ງແຍງ, ປະເພດ (ຕົວຢ່າງ: ກົດໝາຍພາສີ, ກົດໝາຍ SPS, ກົດໝາຍຂົນສົ່ງ ແລະ ອື່ນໆ) ແລະ ມື້ທີ່ອອກນິຕິກຳ. ອີກທາງເລືອກໜຶ່ງ, ຜູ້ເຂົ້າຊົມໃຊ້ສາມາດພິມຄຳສັບຫຼັກ ແລະ ລະບົບຈະຄົ້ນຫາຄຳສັບຫຼັກນັ້ນ ຢູ່ໃນເນື້ອໃນທັງໝົດ. ຢູ່ທາງໜ້າຂອງເນື້ອໃນນິຕິກຳມີບ່ອນເຂົ້າຫາແຕ່ລະຫົວຂໍ້ ຢູ່ໃນເອກະສານ.

ສຳເນົາຂອງແຕ່ລະເອກະສານ ສາມາດດາວໂຫຼດ ຫຼື ພິມອອກ ມາໄດ້ ດ້ວຍການສັງເກດສັນຍາລັກ PDF ຄືດັ່ງຮູບພາບດັ່ງນີ້:



## 4.2.3. ເມນູຄົ້ນຫາ ແບບຟອມການນຳເຂົ້າ ແລະ ສົ່ງອອກ

ຜູ້ນຳເຂົ້າ ແລະ ສົ່ງອອກ ອາດຈະຕ້ອງການຢາກຮູ້ວ່າ ຂັ້ນຕອນໃດໃຫ້ນຳໃຊ້ແບບຟອມສະເພາະ ແລະ ສຳລັບສິນຄ້າໃດ. ເຄື່ອງມືນີ້ເຮັດໃຫ້ຜູ້ນຳເຂົ້າ ແລະ ສົ່ງອອກ ຊອກຫາແບບຟອມຕ່າງໆໄດ້.




LTP
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສູນຂໍ້ມູນຂ່າວສານ ທາງດ້ານການຄ້າ
7
ລາຍລະອຽດຂອງ ແບບຟອມ
ລາຍລະອຽດຂອງແບບຟອມ
25-01-2012
20-06-2012
8
ຊື່ຂັ້ນຕອນທີ່ກ່ຽວຂ້ອງກັບແບບຟອມນີ້
9
ກົດທີ່ນີ້ເພື່ອເບິ່ງຂັ້ນຕອນ

### 4.2.4. ເມນູຄົ້ນຫາ ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກ

ຜູ້ນຳເຂົ້າ ແລະ ສົ່ງອອກ ອາດຈະຕ້ອງການຮູ້ວ່າສິນຄ້າໃດນຳໃຊ້ຂັ້ນຕອນສະເພາະ, ມາດຕະການ ແລະ ກົດໝາຍທີ່ກຳນົດວ່າສິນຄ້ານັ້ນ ຕ້ອງປະຕິບັດສອດຄ່ອງ ຫຼື ແບບຟອມໃດທີ່ຕ້ອງໃຊ້ໃນຂັ້ນຕອນນັ້ນ.



ໜ້າຫຼັກ » ຄົ້ນຫາ ຂັ້ນຕອນ » ລາຍລະອຽດຂອງຂັ້ນຕອນ

# ລາຍລະອຽດຂອງຂັ້ນຕອນ

**7** ລາຍລະອຽດຂອງ ຂັ້ນຕອນ

| | |
|---|---|
| **ຫົວຂໍ້ ຂະບວນການ** | ການຂໍອະນຸຍາດນໍາເຂົ້າ ສົ່ງອອກ ຄໍາແທ່ງ (ທະນາຄານແຫ່ງ ສປປ ລາວ) |
| **ລາຍລະອຽດ** | ຂັ້ນຕອນການຂໍອະນຸຍາດນໍາເຂົ້າ ແລະ ສົ່ງອອກນີ້ແມ່ນສໍາລັບຄໍາແທ່ງ ເຊິ່ງນອນຢູ່ນັບສິ່ງລາຍການບໍ່ໄດ້ໂດຍກົງ. ຈໍາເປັນຕ້ອງໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປລາວ (ກົມນະໂຍບາຍເງິນຕາ) ສາກ່ອນ ກະລຸນາເບິ່ງລາຍລະອຽດໃນ *ຂໍ້ຕົກລົງເລກທີ 609/ທຫລ* |

**8** ແຜນວາດດໍາເນີນການຂອງຂັ້ນຕອນ




## Note 1

ໃບຄໍາຮ້ອງຂໍອະນຸຍາດຂຽນເອງ ທົ່ວໄປ.

## Note 2

ໃບທະບຽນວິສາຫະກິດ ຫຼື ໃບທະບຽນສໍານັກງານທີ່ຖືກຕ້ອງຕາມລະບຽບກົດໝາຍ ສໍາລັບນິຕິບຸກຄົນທີ່ຢູ່ໃນລາວ.

## Note 3

ໃບທະບຽນວິສາຫະກິດທີ່ອອກໃຫ້ໂດຍທາງການຂອງປະເທດທີ່ກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ ສໍາລັບນິຕິບຸກຄົນທີ່ບໍ່ໄດ້ຢູ່ໃນລາວ.

## Note 4

ກໍລະນີເອກະສານບໍ່ເປັນພາສາລາວ ຕ້ອງໄດ້ແປເປັນພາສາລາວໂດຍມີການຢັ້ງຢືນຈາກສໍານັກງານທະບຽນສານ ຂອງ ສປປລາວ.

## Note 5

ຜູ້ນໍາເຂົ້າ ສົ່ງອອກ ສາມາດດໍາເນີນການຕາມຂັ້ນຕອນ ການນໍາເຂົ້າ ສົ່ງອອກ ຕາມປົກກະຕິ.

| | |
|---|---|
| **ປະເພດ** | Import/Export |

ຂັ້ນຕອນນີ້ ມີແບບຟອມກ່ຽວຂ້ອງດັ່ງນີ້

| ຊື່ແບບຟອມ | ລາຍລະອຽດ | | ອອກໂດຍ | ດາວໂຫຼດ |
|---|---|---|---|---|

*No results found.*

**9** ມາດຕະການທີ່ກ່ຽວຂ້ອງກັບ ຂັ້ນຕອນນີ້

ຂັ້ນຕອນນີ້ໃຊ້ກັບມາດຕະການລຸ່ມນີ້

| Name | ປະເພດ ມາດຕະການ | ກະຊວງ | ເນື້ອໃນໂດຍຫຍໍ້ | ຄວາມເຫັນ | ລະບຽບການ | ມີຜົນຮອດ |
|---|---|---|---|---|---|---|
| ຮຽກຮ້ອງໃຫ້ມີການຂໍໃບອະນຸຍາດນໍາເຂົ້າ - ຄໍາແທ່ງ | ຕ້ອງມີ ໃບ ອະນຸຍາດ | ທະນາຄານ ແຫ່ງ ສປປ ລາວ | ການນໍາເຂົ້າຄໍາແທ່ງ (ສະເພາະຄໍາແທ່ງທີ່ສາທົບຮັບຮູ້ເພື່ອນໍາໃຊ້ໃນການ ສໍາລະ)ຕ້ອງໄດ້ຮັບອະນຸຍາດນໍາເຂົ້າ ຫຼື ສົ່ງອອກຈາກກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ | ເພື່ອຄວາມໝັ້ນຄົງ ທາງດ້ານ ເສດຖະກິດເງິນຕາ. | ຂໍ້ຕົກລົງ ວ່າດ້ວຍ ການຂໍອະນຸຍາດ ນໍາເຂົ້າ ແລະ ສົ່ງອອກ ຄໍາແທ່ງ ເລກທີ 609/ທຫລ | 31-12-9999 |
| ຮຽກຮ້ອງໃຫ້ຂໍອະນຸຍາດສົ່ງອອກ: ຄໍາແທ່ງ | ຕ້ອງມີ ໃບ ອະນຸຍາດ | ທະນາຄານ ແຫ່ງ ສປປ ລາວ | ການສົ່ງອອກຄໍາແທ່ງ (ສະເພາະຄໍາແທ່ງທີ່ສາທົບຮັບຮູ້ເພື່ອນໍາໃຊ້ການ ສໍາລະ) ຕ້ອງໄດ້ຮັບອະນຸຍາດສົ່ງອອກຈາກກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ | ເພື່ອຄວາມໝັ້ນຄົງ ທາງດ້ານ ເສດຖະກິດເງິນຕາ. | ຂໍ້ຕົກລົງ ວ່າດ້ວຍ ການຂໍອະນຸຍາດ ນໍາເຂົ້າ ແລະ ສົ່ງອອກ ຄໍາແທ່ງ ເລກທີ 609/ທຫລ | 31-12-9999 |

## 4.2.5. ເມນູຄົ້ນຫາ ມາດຕະການ, ມາດຕະຖານ ແລະ ຂໍ້ກຳນົດສະເພາະ

ຜູ້ຄ້າຂາຍອາດຈະຕ້ອງການເບິ່ງມາດຕະການສະເພາະ ຫຼື ຂໍ້ກຳນົດພິເສດ ເຊັ່ນ ຕົວຢ່າງ ມາດຕະການ SPS, ພາສີສົ່ງອອກ.

"ມາດຕະການ" ແມ່ນຂໍ້ກຳນົດພິເສດ ທີ່ຖືກນຳໃຊ້ກັບສິນຄ້າ. ມາດຕະການ ອາດຈະເປັນຂໍ້ຫ້າມຊົ່ວຄາວ ຫຼື ຖາວອນ ຍ້ອນ SPS ຫຼື ເຫດຜົນອື່ນໆ ຫຼື ຂໍ້ກຳນົດສະເພາະ ເພື່ອໃຫ້ໄດ້ເອກະສານສະເພາະໃດໜຶ່ງ ຫຼື ປະຕິບັດຂັ້ນຕອນໃດໜຶ່ງ. ໂດຍປົກກະຕິ, ການນຳໃຊ້ມາດຕະການ ຖືກກຳນົດໂດຍລະບຽບການສະເພາະຂອງກະຊວງ ຫຼື ຕາມມາດຕາທີ່ກຳນົດໃນກົດໝາຍ.

ໃນໜ້ານີ້, ຜູ້ເຂົ້ານຳໃຊ້ຍັງສາມາດຄົ້ນຫາມາດຕະຖານດ້ານເຕັກນິກແຫ່ງຊາດ (ແບບສະໝັກໃຈ ຫຼື ແບບບັງຄັບ) ທີ່ອາດຈະກ່ຽວຂ້ອງກັບສິນຄ້າຫຼາກຫຼາຍປະເພດ.

ການຄົ້ນຫາມາດຕະການ/ຂໍ້ກຳນົດສະເພາະມີວິທີການດັ່ງຕໍ່ໄປນີ້:


1
ເລື່ອນເມົ້າໄປທີ່ "ຖານຂໍ້ມູນ"
ສູນຂໍ້ມູນຂ່າວສານ ທາງດ້ານການຄ້າ
ໜ້າຫຼັກ
ກະດານຂ່າວ
ຖານຂໍ້ມູນ
ເອກະສານການຄ້າ
ຄົ້ນຫາອັດຕາພາສີ
ຄົ້ນຫາພິທີກໍາ
ຄົ້ນຫາແບບຟອມ
ຄົ້ນຫາຂັ້ນຕອນ
ມາດຕະການ, ມາດຕະຖານ ແລະ ຂໍ້ກໍານົດ
2
ກົດໃສ່ຄໍາວ່າ "ມາດຕະການ, ມາດຕະຖານ ແລະ ຂໍ້ກໍານົດ"
ມາດຕະການ, ມາດຕະຖານ ແລະ ຂໍ້ກໍານົດສະເພາະ ຫຼ້າສຸດ
3
ພື້ນທີ່ສໍາລັບ 05 ມາດຕະການ, ມາດຕະຖານ ແລະ ຂໍ້ກໍານົດສະເພາະ ທີ່ອັບໂຫຼດຫຼ້າສຸດ
4
ປ້ອນຄໍາສັບເພື່ອຄົ້ນຫາມາດຕະການ ເຊັ່ນວ່າ: ຊື່ມາດຕະການ, ເນື້ອໃນ ຫຼື ຄໍາສັບຕ່າງໆ
Search
5
ຫຼັງຈາກປ້ອນຄໍາສັບໃນຊ່ອງຄົ້ນຫາແລ້ວກົດປຸ່ມ Search ເພື່ອເລີ່ມຄົ້ນຫາ
6
ຜົນຂອງການຄົ້ນຫາຈາກຄໍາສັບທີ່ທ່ານປ້ອນເຂົ້າໄປໃນຊ່ອງການຄົ້ນຫາ ທ່ານສາມາດກົດເຂົ້າໄປເບິ່ງລາຍລະອຽດຂອງມາດຕະການນັ້ນໆໄດ້ ດັ່ງພາບລຸ່ມນີ້:


7
ລາຍລະອຽດຂອງມາດຕະການ
LTP
ເບິ່ງມາດຕະການ
Name
13-03-2012
31-12-9999
2012-02-09 18:07:57
2016-02-04 08:32:47
Active
ຂັ້ນຕອນ
8
ຂັ້ນຕອນທີ່ຕິດພັນກັບ
ມາດຕະການນີ້
ລະຫັດ HS Code
26011100
26011200
26012000
26020000
26030000
26040000
26050000
26060000
26070000
26080000
Go to page: << First < Previous 1 2 3 Next > Last >>
See all drafts >>
LTP
9
ລະຫັດພາສີ ແລະ ລາຍຊື່ຂອງສິນຄ້າ
ທີ່ຖືກນຳໃຊ້ໂດຍມາດຕະການດັ່ງກ່າວ

## 4.3. ເມນູເອກະສານການຄ້າ

### 4.3.1 ເມນູບົດຄວາມ

ທ່ານສາມາດຄົ້ນຫາບົດຄວາມ ກ່ຽວກັບ ການຄ້າທີ່ທາງທີມງານບໍລິຫານ-ຄຸ້ມຄອງສູນຂໍ້ມູນຂ່າວສານທາງດ້ານການຄ້ານຳມາເຜີຍແຜ່ ໂດຍຜ່ານເຄື່ອງມື ແລະ ຕາມຂັ້ນຕອນດ້ານລຸ່ມນີ້:



## 4.3.2. ເອກະສານສິ່ງພິມ

ເອກະສານສິ່ງພິມລວມມີ ບົດຄົ້ນຄວ້າວິໄຈທີ່ກ່ຽວຂ້ອງກັບການຄ້າ, ຄູ່ມື, ແຜ່ນພັບ ແລະ ອື່ນໆ ທີ່ກ່ຽວຂ້ອງກັບວຽກງານການຄ້າໃນຮູບແບບ PDF ສາມາດເຂົ້າເບິ່ງໄດ້ດັ່ງຮູບລຸ່ມນີ້:



### 4.3.3. ສັນຍາ ກ່ຽວກັບ ການອຳນວຍຄວາມສະດວກທາງດ້ານການຄ້າ.

ເປັນເມນູສຳລັບແນະນຳໃຫ້ຜູ້ທີ່ມີຄວາມຕ້ອງການຢາກຮູ້ ກ່ຽວກັບ ບັນດາສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ.




### 4.3.4. ສູນຂໍ້ມູນຂ່າວສານທາງດ້ານການຄ້າ ແຫ່ງຊາດ.

ເພື່ອປະຕິບັດໃຫ້ສອດຄ່ອງກັບສັນຍາຕາມມາດຕາ 13 ຂອງ ATIGA ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ຈຶ່ງໄດ້ສ້າງໜ້າ "ສູນຂໍ້ມູນຂ່າວສານທາງດ້ານການຄ້າ ແຫ່ງຊາດ (National Trade Repository)" ເພື່ອເຊື່ອມໂຍງເຂົ້າກັບສູນຂໍ້ມູນຂ່າວສານທາງດ້ານການຄ້າ ອາຊຽນ (ASEAN Trade Repository). ໃນໜ້ານີ້ຈະລິ້ງ (Link) ໃສ່ 09 ຂົງເຂດຂໍ້ມູນດັ່ງນີ້:

1) ການຈັດລະຫັດພາສີ;
2) ອັດຕາພາສີ MFN ອັດຕາພາສີທີ່ປະຕິບັດຕໍ່ປະເທດທີ່ໄດ້ຮັບການອະນຸເຄາະຍິ່ງ,ອັດຕາພາສີລະຫວ່າງອາຊຽນ ກັບ ປະເທດພາຄີອາຊຽນ ແລະ ອັດຕາພາສີ CEPT ຫຼື ອັດຕາພາສີພິເສດ ສຳລັບທຸກສິນຄ້າທີ່ມີການຄ້ານຳກັນລະຫວ່າງບັນດາປະເທດສະມາຊິກອາຊຽນ;
3) ລະບຽບແຫຼ່ງກຳເນີດສິນຄ້າ;
4) ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ;
5) ກົດໝາຍການຄ້າ, ກົດໝາຍພາສີ ແລະ ນິຕິກຳອື່ນໆ;
6) ຂັ້ນຕອນ ແລະ ເອກະສານທີ່ຈຳເປັນ;
7) ລະບຽບການບໍລິຫານ;
8) ແບບຢ່າງຕົວຈິງທີ່ດີໃນການ ອຳນວຍຄວາມສະດວກທາງດ້ານການຄ້າ;

9) ລາຍຊື່ຜູ້ປະກອບການທີ່ໄດ້ຮັບອຸນຍາດ (ແບບອັດຕະໂນມັດ).




## 4.4. ຂໍ້ມູນກ່ຽວກັບການເຂົ້າສູ່ຕະຫລາດ

ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ ສະໜອງຂໍ້ມູນຂ່າວສານ ກ່ຽວກັບ ການເຂົ້າສູ່ຕະຫລາດ ເຊິ່ງລວມມີບັນດາຂໍ້ມູນຄື: 1)ການຄ້າກັບປະເທດສະມາຊິກອາຊຽນ; 2)ການຄ້າກັບສະຫະພາບເອີຣົບ; 3)ການຄ້າກັບປະເທດອື່ນໆ; ແລະ 4)ການຄ້າຊາຍແດນ.



## 4.4.1. ໜ້າຕ່າງການຄ້າກັບສະມາຊິກອາຊຽນ:



### ສັນຍາການຄ້າສິນຄ້າອາຊຽນ (ATIGA)

ການຄ້າລະຫວ່າງປະເທດສະມາຊິກອາຊຽນແມ່ນເປັນໄປຕາມຂໍ້ຕົກລົງ ATIGA (ASEAN Trade in Goods Agreement). ກົດລິ້ງນີ້ເພື່ອກວດເບິ່ງລາຍລະອຽດຂອງຂໍ້ຕົກລົງ.

▶ *ສັນຍາການຄ້າດ້ານສິນຄ້າອາຊຽນ*

▶ *ລະບຽບການແຫລ່ງກຳເນີດສິນຄ້າສຳລັບ CEPT*



### ຂໍ້ຕົກລົງການຄ້າເສລີ (FTA)

ໃນນາມສະມາຊິກຂອງ ASEAN, ສປປ ລາວ ແມ່ນສະມາຊິກຂອງຂອບຂໍ້ຕົກລົງການຄ້າເສລີ (FTA) ຫຼາຍຂໍ້ ຕົກລົງ. ຂໍ້ຕົກລົງເຫຼົ່ານີ້ແມ່ນແນໃສ່ອຳນວຍຄວາມສະດວກທາງດ້ານການຄ້າ ລະຫວ່າງບັນດາປະເທດສະມາຊິກ ASEAN ກັບປະເທດຄູ່ເຈລະຈາຕາມຂໍ້ຕົກລົງ. ວັດຖຸປະສົງທີ່ສຳຄັນໜຶ່ງແມ່ນເພື່ອຫຼຸດຜ່ອນອັນຕາພາສີໃຫ້ເຫຼືອ ສູນ.
ການຍົກເວັ້ນພາສີແບບເດັດຂາດແມ່ນຕ້ອງໄດ້ຄ່ອຍໆດຳເນີນການຜ່ານການຫຼຸດຜ່ອນພາສີເປັນໄລຍະໆ.
ສະມາຊິກ ASEAN ແຕ່ລະປະເທດມີພັນທະຕ້ອງໄດ້ຫຼຸດຜ່ອນພາສີນີ້.
ທ່ານອາດຈະກວດເບິ່ງລະອຽດຕາຕະລາງການຫຼຸດຜ່ອນພາສີຂອງຂໍ້ຕົກລົງການຄ້າເສລີແຕ່ລະສະບັບໂດຍການ ກົດເບິ່ງລິ້ງຕ່າງໆຂ້າງລຸ່ມນີ້.

▶ *ຂໍ້ຕົກລົງການຄ້າເສລີ*

## 4.4.2. ໜ້າຕ່າງການຄ້າກັບສະຫະພາບເອີຣົບ:



### ການຄ້າກັບສະຫະພາບເອີຣົບ

*ບໍລິການຊ່ວຍເຫລືອການສົ່ງອອກ (Export Helpdesk)* ແມ່ນບໍລິການອອນລາຍທີ່ສະໜອງໂດຍຄະນະກຳມາທິການເອີຣົບ ເພື່ອອຳນວຍຄວາມສະ ດວກໃນການເຂົ້າເຖິງຕະຫຼາດເອີຣົບໃຫ້ແກ່ບັນດາປະເທດກຳລັງພັດທະນາ.
ນີ້ເປັນບໍລິການຟຣີ, ບໍ່ຄິດຄ່າ ແລະ ເປັນບໍລິການທີ່ໃຊ້ງ່າຍ ທີ່ສະໜອງຂໍ້ມູນໃຫ້ແກ່ບັນດາຜູ້ສົ່ງອອກທີ່ມີຄວາມສົນໃຈໃນການສົ່ງສິນຄ້າເຂົ້າສູ່ຕະຫຼາດເອີຣົບ.

▶ *ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການແນະນຳກ່ຽວກັບ ຂໍ້ກຳນົດດ້ານ ສຸຂານາໄມພືດ ຂອງປະເທດໃນກຸ່ມສະຫະພາບເອີລົບ*

▶ *ສະຫະພາບເອີຣົບ (EU) ໄດ້ບັງຄັບໃຊ້ ລະບຽບການຄ້າໄມ້ສະບັບໃໝ່*

▶ *ສາທາລະນະລັດ ຕວັກກີ ໄດ້ອອກໃບຢັ້ງຢືນສຸຂາອະນາໄມໃນຮູບແບບໃໝ່ ສຳຫລັບການສົ່ງ ອອກຜະລິດຕະພັນປາ ແລະ ການປະມົງ*

▶ *ບໍລິການຊ່ວຍເຫລືອການສົ່ງອອກ*



▶ *ແຈ້ງການຕໍ່ຜູ້ທີ່ສົ່ງອອກພືດສຳລັບປູກ ໄປຍັງສະຫະພາບເອີຣົບ*

▶ *ສະຫະພາບເອີຣົບໄດ້ຮັບຮອງ ແລະ ພິມເຜີຍແຜ່ລະບຽບການໃໝ່ ວ່າດ້ວຍການຜ່ອນຜັນພາສີນຳເຂົ້າສິນຄ້າຈາກ ປະເທດກຳລັງພັດທະນາ (Generalised scheme of Preferences = GSP)*

### 4.4.3. ໜ້າຕ່າງການຄ້າກັບປະເທດອື່ນໆ:




### 4.4.4. ໜ້າຕ່າງການຄ້າຊາຍແດນ:




## 4.5. ສິດທິພິເສດດ້ານການຄ້າ

### 4.5.1. ໜ້າຕ່າງເມນູສິດທິພິເສດດ້ານການຄ້າ

ເມນູນີ້ຈະອະທິບາຍໃຫ້ທ່ານເຂົ້າໃຈ ກ່ຽວກັບ ສິດທິພິເສດດ້ານການຄ້າໂດຍຫຍໍ້ ພ້ອມທັງຂັ້ນຕອນເພື່ອໃຫ້ໄດ້ຮັບສິດທິພິເສດດັ່ງກ່າວ. ການເຂົ້າຫາໜ້າຕ່າງຂອງເມນູດັ່ງກ່າວໃຫ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:




## 4.5.2. ໜ້າຕ່າງເມນູສິດທິພິເສດແບບໃຫ້ຝ່າຍດຽວ

ເມນູນີ້ຈະອະທິບາຍໃຫ້ທ່ານເຂົ້າໃຈ ກ່ຽວກັບ ສິດທິພິເສດແບບໃຫ້ຝ່າຍດຽວໂດຍຫຍໍ້ ທີ່ ສປປ ລາວ ໄດ້ຮັບຈາກບັນດາປະເທດທີ່ພັດທະນາແລ້ວ ໂດຍການຍົກເວັ້ນ ຫຼືຫຼຸດຜ່ອນອັດຕາພາສີແກ່ສິນຄ້າທີ່ນຳເຂົ້າຈາກປະເທດກຳ ລັງພັດທະນາ ແລະດ້ອຍພັດທະນາ. ລາຍລະອຽດໃຫ້ເຂົ້າໄປອ່ານໃນໜ້າຕ່າງເມນູດັ່ງກ່າວ, ສ່ວນວິທີເຂົ້າໃຫ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:



## ໜ້າຕ່າງເມນູເຂດການຄ້າເສລີ

ເມນູນີ້ຈະອະທິບາຍໃຫ້ທ່ານເຂົ້າໃຈ ກ່ຽວກັບ ສິດທິພິເສດດ້ານການຄ້າທີ່ ສປປ ລາວ ໄດ້ຮັບພາຍໃຕ້ສັນຍາການຄ້າເສລີທີ່ສຳຄັນຕໍ່ ສປປ ລາວ ມີຄືແນວໃດ ການເຂົ້າຫາເມນູດັ່ງກ່າວໃຫ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້



5 ເມື່ອກົດເລືອກເອົາຂໍ້ມູນ ຕາຕະລາງອັດຕາພາສີ AANZFTA ລະບົບກໍ່ຈະສະແດງພາບດັ່ງໃນ ຂັ້ນຕອນທີ 05

ລະຫັດພາສີ — ຊື່ສິນຄ້າ — ອັດຕາພາສີຂອງແຕ່ລະປີ

| HS Code | Description | 2016 | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 | 2025 and subsequent years |
|---|---|---|---|---|---|---|---|---|---|---|---|
| **01.01** | **Live horses, asses, mules and hinnies.** | | | | | | | | | | |
| 0101.10.00 | - Pure-bred breeding animals | 5% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0101.90 | - Other: | | | | | | | | | | |
| 0101.90.30 | - - Horses | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0101.90.90 | - - Other | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| **01.02** | **Live bovine animals.** | | | | | | | | | | |
| 0102.10.00 | - Pure-bred breeding animals | 5% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0102.90 | - Other: | | | | | | | | | | |
| 0102.90.10 | - - Oxen | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0102.90.20 | - - Buffaloes | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0102.90.90 | - - Other | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| **01.03** | **Live swine.** | | | | | | | | | | |
| 0103.10.00 | - Pure-bred breeding animals | 5% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| | - Other: | | | | | | | | | | |
| 0103.91.00 | - - Weighing less than 50 kg | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0103.92.00 | - - Weighing 50 kg or more | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| **01.04** | **Live sheep and goats.** | | | | | | | | | | |
| 0104.10 | - Sheep: | | | | | | | | | | |
| 0104.10.10 | - - Pure-bred breeding animals | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0104.10.90 | - - Other | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0104.20 | - Goats: | | | | | | | | | | |
| 0104.20.10 | - - Pure-bred breeding animals | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| 0104.20.90 | - - Other | 8% | 5% | 5% | 3% | 2% | 0% | 0% | 0% | 0% | 0% |
| **01.05** | **Live poultry, that is to say, fowls of the species *Gallus domesticus*, ducks, geese, turkeys and guinea fowls.** | | | | | | | | | | |
| | - Weighing not more than 185 g: | | | | | | | | | | |
| 0105.11 | - - Fowls of the species *Gallus domesticus*: | | | | | | | | | | |
| 0105.11.10 | - - - Breeding fowls | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0105.11.90 | - - - Other | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0105.12 | - - Turkeys: | | | | | | | | | | |
| 0105.12.10 | - - - Breeding turkeys | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0105.12.90 | - - - Other | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0105.19 | - - Other: | | | | | | | | | | |
| 0105.19.10 | - - - Breeding ducklings | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0105.19.30 | - - - Breeding goslings | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| 0105.19.90 | - - - Other | 8% | 5% | 5% | 5% | 5% | 5% | 5% | 5% | 0% | 0% |
| | - Other: | | | | | | | | | | |

## 4.5.4. ແບບຟອມສຳລັບຂໍ CO



### 4.5.5. ຄຳຖາມທີ່ຖືກຖາມເລື້ອຍໆ (FAQ) ກ່ຽວກັບ ສິທິພິເສດທາງດ້ານການຄ້າ




## 5. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານຂ້າງ

### 5.1. ເມນູກະດານສົນທະນາ

ເມນູນີ້ນຳໃຊ້ສະເພາະ ທີມງານບໍລິຫານ ແລະ ບັນດາຈຸດປະສານງານ ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ ເທົ່ານັ້ນ



## 5.2. ການເຂົ້າເປັນສະມາຊິກ




ທຸກໆເຄື່ອງມື ທີ່ໄດ້ອະທິບາຍໃນຄູ່ມືນີ້ ແນໃສ່ໃຫ້ຂໍ້ມູນຂ່າວສານຕໍ່ສາທາລະນະຊົນ ຢ່າງໂປ່ງໃສ ແລະ ຈະແຈ້ງ ເຖິງຢ່າງໃດກໍ່ຕາມ ສິ່ງເຫລົ່ານີ້ ແມ່ນເຄື່ອງມືແບບບໍ່ຕາຍຕົວ ເຊິ່ງສາທາລະນະຊົນຕ້ອງຊອກຫາວ່າພວກເຂົາຕ້ອງການຄົ້ນຫາຫຍັງ.

ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ ຍັງເປັນເຄື່ອງມືທີ່ມີ "ມູນຄ່າເພີ່ມ" ແກ່ຜູ້ເຂົ້າໃຊ້ທີ່ຕ້ອງການສະໝັກເປັນສະມາຊິກເວັບໄຊທ໌. ເຄື່ອງມືເຫລົ່ານີ້ໃຫ້ຂໍ້ມູນສະເພາະ ທີ່ຈຳເປັນກ່ຽວກັບການຄ້າ ໄປພ້ອມໆກັບການທີ່ເຮັດໃຫ້ພາກລັດສາມາດໃກ້ຊິດກັບສາທາລະນະຊົນ, ເຂົ້າໃຈຄວາມຕ້ອງການ, ຕິດຕາມການຕອບຮັບ ແລະ ພຶດຕິກຳຂອງສາທາລະນະຊົນ.

ຢູ່ໜ້າຫລັກຂອງ ເວັບໄຊທ໌ ໃຫ້ທາງເລືອກໃນການລົງທະບຽນເປັນສະມາຊິກ. ເພື່ອລົງທະບຽນ ຜູ້ເຂົ້ານຳໃຊ້ຕ້ອງສະໜອງຂໍ້ມູນລະອຽດເຊັ່ນ: ຊື່, ທີ່ຢູ່, ປະເພດທຸລະກິດ ແລະ ອື່ນໆ. ແລະ ສິ່ງທີ່ສຳຄັນແມ່ນຕ້ອງໄດ້ສະໜອງອີເມລ ທີ່ເຮັດໜ້າທີ່ເປັນ ID ເພື່ອ ຕິຊື່ເຂົ້າສູ່ລະບົບ ແລະ ລະຫັດຜ່ານ ເຊິ່ງຜູ້ເຂົ້ານຳໃຊ້ສາມາດເລືອກ ແລະ ປ່ຽນແປງໄດ້ ຕາມຄວາມຕ້ອງການ.

ຫລັງຈາກ ສະໝັກເປັນສະມາຊິກຂອງເວັບໄຊທ໌ ສູນຂໍ້ມູນຂ່າວສານທາງດ້ານການຄ້າແລ້ວ ສະມາຊິກຈະໄດ້ຮັບປະໂຫຍດຈາກການບໍລິການພິເສດດັ່ງລຸ່ມນີ້:

- ລະບົບຈະສົ່ງອີເມລ ຫລື ຂໍ້ຄວາມແຈ້ງ ໃຫ້ສະມາຊິກຊາບທຸກໆຄັ້ງ ໃນເວລາມີຂໍ້ມູນໃໝ່ເພີ່ມເຂົ້າມາໃນເວັບໄຊທ໌ ເຊັ່ນ: ຂ່າວສານ, ປະກາດ ແລະ ອື່ນໆ...
- ເຄື່ອງມື "ຕິດຕາມ (Follow)" ອະນຸຍາດໃຫ້ສະມາຊິກ ໝາຍເລືອກປະເພດຂໍ້ມູນສະເພາະທີ່ຕົນເອງສົນໃຈ ແລະ ຮັບເອົາຂ່າວສານທຸກຄັ້ງທີ່ມີບາງຢ່າງເພີ່ມເຂົ້າໃນສິນຄ້າ ຫລື ບາງຢ່າງມີການປ່ຽນແປງ ຕົວຢ່າງ ມາດຕະການໃໝ່ ວັນສິ້ນສຸດການນຳໃຊ້ມາດຕະການ ລະບຽບການໃໝ່ ແລະ ອື່ນໆ ຕໍ່ກັບສິນຄ້າທີ່ຕົນເອງສົນໃຈ.
- ເວັບໄຊທ໌ ຈະສົ່ງແບບສອບຖາມ ຫລື ບົດສຳຫລວດໃຫ້ສະມາຊິກເປັນແຕ່ລະໄລຍະ ເພື່ອເກັບກຳເອົາຄຳຄິດເຫັນໃນຫລາກຫລາຍບັນຫາ ເຊັ່ນ: ການດຳເນີນການທາບທາມ ກ່ອນກົດໝາຍໃໝ່ຈະຖືກສ້າງຂຶ້ນຊຶ່ງຜ່ານສະພາແຫ່ງຊາດ.

ລາຍລະອຽດຈະອະທິບາຍໃນຮູບພາບຕໍ່ໄປນີ້:

## 5.2.1 ການສະໝັກເປັນສະມາຊິກ



## ການເຂົ້າສູ່ລະບົບສະມາຊິກໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ

ກ່ອນທີ່ທ່ານຈະສາມາດເຂົ້າສູ່ລະບົບຂອງສະມາຊິກໄດ້ ທ່ານຈະຕ້ອງສະໝັກເປັນສະມາຊິກໃນເວັບໄຊທ໌ເສຍກ່ອນ ວິທີການແມ່ນຕາມຫົວຂໍ້ ຜ່ານມານີ້. ຫຼັງຈາກທີ່ສະໝັກເປັນສະມາຊິກຮຽບຮ້ອຍແລ້ວກໍ່ນຳເອົາອີເມວ ແລະ ລະຫັດຜ່ານທີ່ທ່ານໄດ້ຕັ້ງຄ່າໄວ້ ມາປ້ອນໃສ່ແບບຟອມດັ່ງລຸ່ມນີ້:




## ນຳໃຊ້ເຄື່ອງມື "ຕິດຕາມ (Follow)" ຂໍ້ມູນຂ່າວສານທີ່ມີການອັບເດດໃຫ່ມ ຜ່ານທາງອີເມລ

**ກ ຕິດຕາມຂ່າວສານ** ເມື່ອເຂົ້າສູ່ລະບົບສຳເລັດຈະປະກົດເຫັນລາຍການເມນູເພີ່ມເຂົ້າມາໃນ ເມນູດ້ານເທິງ ຊື່ວ່າ "**ສະມາຊິກ**" ເຊິ່ງເປັນເມນູສຳລັບສະມາຊິກທີ່ສາມາດແກ້ໄຂຂໍ້ມູນສ່ວນຕົວ, ຕິດຕາມສິນຄ້າ ຕິດຕາມຂ່າວສານ, ປ່ຽນລະຫັດ ແລະ ອອກຈາກລະບົບ ຂັ້ນຕອນການເລືອກເພື່ອຕິດຕາມຂ່າວສານແມ່ນມີຂັ້ນຕອນດັ່ງນີ້:



**ຂ) ຕິດຕາມສິນຄ້າ:** ເມື່ອເຂົ້າສູ່ລະບົບຂອງສະມາຊິກແລ້ວ ຈາກນັ້ນຈຶ່ງສືບຕໍ່ດັ່ງຂັ້ນຕອນລຸ່ມນີ້:



## 5.3. ການຄົ້ນຫາຂໍ້ມູນທັງໝົດໃນເວັບໄຊທ໌

ທ່ານສາມາດໃຊ້ບ່ອນ “ຄົ້ນຫາໃນເວັບໄຊທ໌” ທີ່ຢູ່ໃນເມນູເບື້ອງຂວາມື ເພື່ອຊອກຫາຂໍ້ມູນທັງໝົດ ຢູ່ໃນເວັບໄຊທ໌ ໂດຍການພິມຂໍ້ຄວາມທີ່ຕ້ອງການຄົ້ນຫາໃສ່ຊ່ອງຄົ້ນຫາ ຄືດັ່ງຮູບສະແດງລຸ່ມນີ້:




1 ພິມຄຳສັບທີ່ທ່ານຕ້ອງການຄົ້ນຫາໃສ່ບ່ອນນີ້

2 ແລ້ວລະບົບຈະສະແດງຜົນຈາກການພິມຄຳສັບຂ້າງເທິງ ດັ່ງນີ້:



## 5.4. ລະບົບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທາງເອເລັກໂຕຣນິກ ຫຼື e-CO

ສູນຂໍ້ມູນຂ່າວສານທາງດ້ານການຄ້າໄດ້ສ້າງ "Link" ໃຫ້ແກ່ເວັບໄຊທ໌ຂອງລະບົບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ໄວ້ໃນເມນູດ້ານຂ້າງ ເຊິ່ງເປັນລະບົບໜຶ່ງທີ່ອຳນວຍຄວາມສະດວກໃຫ້ແກ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງ ສປປ ລາວ ໃນຮູບແບບເອເລັກໂຕຣນິກ.






## 5.5. ໜ້າຈຸດສອບຖາມ SPS ແລະ TBT

ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ຍັງເຊື່ອມຕໍ່ກັບຈຸດສອບຖາມ SPS – TBT ທີ່ມີໜ້າເວັບໄຊທ໌ຕ່າງຫາກ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ຕໍ່ກັບ SPS ແລະ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ຕໍ່ກັບ TBT ຊຶ່ງທ່ານສາມາດເຂົ້າໄປໄດ້ດັ່ງຮູບສະແດງລຸ່ມນີ້:




ທ່ານສາມາດຊອກຮູ້ຂໍ້ມູນ ແລະ ສິ່ງຄຳຖາມໂດຍກົງຫາຈຸດສອບຖາມ SPS ຫຼື TBT ຈາກໜ້າຈຸດສອບຖາມດັ່ງກ່າວ. ຈຸດສອບຖາມ SPS/TBT ເຮັດໜ້າທີ່ສະໜອງຂໍ້ມູນເພີ່ມເຕີມ ກ່ຽວກັບ ບັນຫາສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລະ ມາດຕະຖານທາງດ້ານເຕັກນິກ (TBT) ລວມທັງລິ້ງຫາອົງການສາກົນທີ່ກ່ຽວຂ້ອງ ເຊິ່ງປະກອບມີ ຫາຂ່າວ ແລະ ປະກາດທີ່ກ່ຽວກັບ SPS ແລະ TBT.

## ຄູ່ມືນຳເຂົ້າ ແລະ ສົ່ງອອກ

ຄຽງຄູ່ກັບຂໍ້ມູນທີ່ມີໂຄງສ້າງຂ້າງເທິງ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ຍັງມີໜ້າເວັບໄຊທ໌ ທີ່ສະໜອງຂໍ້ມູນຂ່າວສານ ທີ່ຜູ້ນຳເຂົ້າ ແລະ ສົ່ງອອກ ຈຳເປັນຕ້ອງຮູ້ເພື່ອນຳເຂົ້າ ຫລື ສົ່ງອອກສິນຄ້າ ໃນຮູບແບບທີ່ງ່າຍດາຍ ແລະ ຖືກຈັດວາງເປັນລຳດັບໂດຍຫົວຂໍ້ສະເພາະ.

ຄູ່ມືນຳເຂົ້າ ແລະ ສົ່ງອອກ ເປັນທາງເລືອກໃນໜ້າຫລັກ ທີ່ຈະນຳໄປສູ່ຂໍ້ມູນກ່ຽວກັບວິທີການນຳເຂົ້າສິນຄ້າມາໃນ ສປປ ລາວ ແລະ ສົ່ງອອກສິນຄ້າຈາກ ສປປ ລາວ ແລະ ມີການຈັດວາງເປັນຫົວຂໍ້ຕ່າງໆດັ່ງລຸ່ມນີ້:

| | | |
|---|---|---|
| ການນຳເຂົ້າ ແລະ ສົ່ງອອກ | ຜູ້ໂດຍສານ ແລະ ຜູ້ເດີນທາງ | ການກະທຳຜິດດ້ານພາສີ |
| ການນຳເຂົ້າ | ການນຳເຂົ້າສິນຄ້າກະສິກຳ | ການລົງໂທດ ແລະ ການອຸທອນ |
| ການສົ່ງອອກ | ສັດລ້ຽງ ຢາ ແລະ ອາຫານ | ນາຍໜ້າພາສີ |
| ການຜ່ານແດນ | ສິນຄ້າຂົນສົ່ງຜ່ານແດນ | ການຍົກເວັ້ນພາສີ |

ສຳເນົາຄູ່ມືນຳເຂົ້າ ແລະ ສົ່ງອອກທີ່ເປັນ ສາມາດດາວໂຫລດໄດ້ຕາມລິ້ງ.




ກົດໃສ່ທີ່ນີ້ ເພື່ອເຂົ້າສູ່ໜ້າຕ່າງ ຄູ່ມືການນຳເຂົ້າ ແລະ ສົ່ງອອກ

## 5.7. ປະຕິທິນເຫດການ

ທ່ານສາມາດກວດເບິ່ງເຫດການທີ່ຈະມາເຖິງເຊັ່ນ: ກອງປະຊຸມ, ສຳມະນາ ແລະ ອື່ນໆ ຢູ່ທີ່ຊ່ອງ "ເຫດການທີ່ຈະມາເຖິງ" ໃນເມນູເບື້ອງຂວາມື ຊຶ່ງຈະສະແດງເຫດການທີ່ຈະເກີດຂຶ້ນໄວ້ທີ່ນີ້, ເມື່ອເຫດການດັ່ງກ່າວສິ້ນສຸດລົງ ຫົວຂໍ້ຂອງເຫດການດັ່ງກ່າວກໍ່ຈະຫາຍໄປ. ທ່ານສາມາດກົດປຸ່ມ "ເຫດການອື່ນໆ" ເພື່ອເບິ່ງເຫກການທີ່ເກີດຂຶ້ນທັງໝົດ, ດັ່ງຮູບສະແດງລຸ່ມນີ້:



## 5.8. ເມນູເພີ່ມເຕີມດ້ານຂ້າງ







ພື້ນທີ່ໃຊ້ປະກາດຮັບພະນັກງານ ສຳລັບໂຄງການ ຊ່ວຍເຫຼືອລ້າຫຼາຍຝ່າຍ ເພື່ອພັດທະນາການຄ້າ (TDF)

ພື້ນທີ່ຂອງລາຍການຮ່າງນິຕິກຳ ແລະ ຮ່າງເອກະສານ ທີ່ຕິດພັນກັບການຄ້າ ໂດຍສະເພາະແມ່ນ ການນຳເຂົ້າ ແລະ ສົ່ງອອກ ເພື່ອເປີດກວ້າງໃຫ້ສັງຄົມປະກອບຄຳເຫັນ. ທ່ານສາມາດປະກອບຄຳເຫັນ ໃນໄລຍະເວລາທີ່ທາງຂະແໜງການກ່ຽວຂ້ອງ ກຳນົດໃຫ້.

ອັດຕາແລກປ່ຽນຂອງ ສປປ ລາວ ໃນແຕ່ລະມື້ອີງຕາມ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ຟ້ອນລາວ ຫຼື Lao Script ເພື່ອຕິດຕັ້ງໃນຄອມພິວເຕີຂອງທ່ານ ຊຶ່ງເປັນໂປແກມຟ້ອນລາວທີ່ເໝາະສົມກັບເວັບໄຊທ໌ LTP ຫຼາຍທີ່ສຸດ.

ຖ້າຕ້ອງການຮູ້ວ່າສູນຂໍ້ມູນຂ່າວສານທາງດ້ານການຄ້າແມ່ນຫຍັງຜ່ານທາງ ຢູ່ທູບ (www.youtube.com), ແລະ ສາມາດຕິດຕາມຂໍ້ມູນຂ່າວສານເພີ່ມເຕີມໄດ້ໂດຍຜ່ານທາງ ເຟສບຸກ (www.facebook.com) ໄດ້ອີກທາງເລືອກໜຶ່ງ.

## 6. ການເຂົ້າຫາ ແລະ ວິທີນຳໃຊ້ ກຸ່ມເມນູດ້ານລຸ່ມສຸດ

### 6.1. ແຜນຜັງຂອງເວັບໄຊທ໌

ນີ້ແມ່ນລາຍຊື່ຂອງຫົວຂໍ້ ກ່ຽວກັບເວັບໄຊທ໌ ທີ່ຖືກຈັດວາງຕາມສາຍຕັ້ງ ຊຶ່ງເຮັດໃຫ້ຜູ້ເຂົ້າໃຊ້ ຊອກຫາຫົວຂໍ້ຕ່າງໆໄດ້ໄວຂຶ້ນໂດຍເລືອກເອົາລິ້ງ (link) ກໍ່ສາມາດເຂົ້າຫາໜ້າທີ່ກ່ຽວຂ້ອງໄດ້ໂດຍກົງ. ຂັ້ນຕອນການເຂົ້າຫາແມ່ນດັ່ງຮູບລຸ່ມນີ້:



## 6.2. ເມນູຄຳສັບທົ່ວໄປ

ເມນູນີ້ຈະຊ່ວຍອະທິບາຍໃຫ້ທ່ານຮູ້ ກ່ຽວກັບ ຄຳສັບຫຍໍ້ທີ່ມີໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ.




## 6.3. ຊ່ວຍເຫຼືອ

ໜ້ານີ້ສະແດງໃຫ້ເຫັນ ຮູບແບບຄຸນລັກສະນະຕ່າງໆຂອງເວັບໄຊທ໌ໃນຫົວຂໍ້ຕ່າງໆທີ່ໄດ້ ຈັດວາງຕາມລຳດັບ ແລະ ຊອກຫາໄດ້ ແລະ ຈະມີການເຊື່ອມຕໍ່ (link) ກັບຫົວຂໍ້ ອື່ນໆ ທີ່ມີຄວາມກ່ຽວຂ້ອງກັນ.



## 6.4. ເງື່ອນໄຂການນຳໃຊ້

ເງື່ອນໄຂ ທີ່ໃຊ້ຄຸ້ມຄອງການນຳໃຊ້ຂໍ້ມູນຂ່າວສານ ທີ່ເຜີຍແຜ່ໃນເວັບໄຊທ໌.




## 6.5. ເມນູຕິດຕໍ່ພວກເຮົາ:

ແມ່ນອັນດຽວກັນກັບເມນູ “ຕິດຕໍ່ສອບຖາມ” ຂອງກຸ່ມເມນູດ້ານເທິງສຸດ



## 6.6. ສິ່ງຄຳແນະນຳ

ແບບຟອມສະແດງຄຳຄິດເຫັນມີໄວ້ເພື່ອໃຫ້ຄົນທົ່ວໄປສາມາດສົ່ງຄຳຄິດເຫັນກ່ຽວກັບເວັບໄຊທ໌ ເຂົ້າມາຫາທີມງານຄຸ້ມຄອງເວັບໄຊທ໌ ເພື່ອເປັນຂໍ້ມູນວິເຄາະການຕອບຮັບຂອງຜູ້ເຂົ້າຊົມໃຊ້ຕໍ່ກັບ ເວັບໄຊທ໌ ແລະ ສະແດງໃຫ້ເຫັນບັນຫາທີ່ຈະຕ້ອງໄດ້ມີການປັບປຸງ.



# ແບບຕົວຢ່າງ
# ການຄົ້ນຫາອັດຕາພາສີ




ປ້ອນ **HSCODE** ຫຼື ລາຍລະອຽດ *

- ◉ **HSCODE**
- ○ ລາຍລະອຽດ

[ ] List all

## ⟹ ແບບຕົວຢ່າງຂອງການຄົ້ນຫາອັດຕາພາສີນຳເຂົ້າຂອງສິນຄ້າປະເພດໃດໜຶ່ງ

**<u>ຄຳຖາມ:</u>** ຖ້າທ່ານຕ້ອງການນຳເຂົ້າສິນຄ້າປະເພດ **<u>(ເຂົ້າຫອມ)</u>** ຄວນເຮັດແນວໃດ? ລະຫັດພາສີຂອງສິນຄ້ານີ້ແມ່ນຫຍັງ? ແລະຈະຕ້ອງໄດ້ຂໍອະນຸຍາດໃຫ້ນຳເຂົ້າບໍ່? ຖ້າຂໍ ຕ້ອງຂໍຢູ່ໃສ? ມີແບບຟອມບໍ່?

**<u>ຄຳຕອບ:</u>**

ກ່ອນອື່ນໝົດທ່ານຕ້ອງຊອກຫາລະຫັດພາສີຂອງເຂົ້າຫອມກ່ອນ ໂດຍການເຂົ້າໄປໜ້າຫຼັກຂອງເວັບໄຊທ໌ ສູນຂໍ້ມູນຂ່າວສານທາງດ້ານການຄ້າ ສປປ ລາວ ແລ້ວທ່ານຈຶ່ງສາມາດຄົ້ນຫາຂໍ້ມູນຕໍ່ໄປຕາມທີ່ທ່ານຕ້ອງການໃນຄຳຖາມຕົວຢ່າງຂ້າງເທິງໄດ້ ດັ່ງວິທີຕໍ່ໄປນີ້:




ປ້ອນ HSCODE ຫຼື ລາຍລະອຽດ*
HSCODE
ລາຍລະອຽດ
List all
ຖ້າທ່ານຕ້ອງການຊອກຫາສິນຄ້າ ຕາມລະຫັດ HS Code, ກະລຸນາປ້ອນ ລະຫັດເຄົ້າ 2, 4, 6 ຕົວເລກທຳອິດ ຫຼື ທັງໝົດ 8 ຕົວເລກຂອງລະຫັດສິນຄ້າ
ຄົ້ນຫາ
10 ໝວດທີ 10 ທັນຍາພືດ
1006 ເຂົ້າ.
100630 - ເຂົ້າທີ່ສີແລ້ວ ຫຼື ເຂົ້າທີ່ສີບໍ່ລະອຽດ, ຈະຂັດ
10063030 - - ເຂົ້າຫອມ
8
ກົດໃສ່ລະຫັດສິນຄ້າອີກເທື່ອໜຶ່ງ ເພື່ອເຂົ້າເບິ່ງອັດຕາພາສີ ແລະ ລາຍລະອຽດອື່ນໆ...
LTP
Lao PDR Trade Portal
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສູນຂໍ້ມູນຂ່າວສານ ທາງດ້ານການຄ້າ
ໜ້າຫຼັກ » ຄົ້ນຫາສິນຄ້າ » ລະຫັດ » 10063030
ສິນຄ້າ
ລະຫັດເຄົ້າ 2 ຕົວເລກ
10 ໝວດທີ 10 ທັນຍາພືດ
ລະຫັດເຄົ້າ 4 ຕົວເລກ
1006 ເຂົ້າ.
ລະຫັດຍ່ອຍ 6 ຕົວເລກ
100630 - ເຂົ້າທີ່ສີແລ້ວ ຫຼື ເຂົ້າທີ່ສີບໍ່ລະອຽດ, ຈະຂັດໃຫ້ຂາວ ຫຼື ບໍ່ກໍ່ຕາມ: - - ອື່ນໆ:
ລະຫັດຍ່ອຍ HS Code 8 ຕົວເລກ
10063030 - - ເຂົ້າຫອມ
ອັດຕາພາສີ
ອັດຕາພາສີ
MFN Import 5.00 ກລ 01-04-2013 31-12-9999
ATIGA-2015 Import 5.00 ກລ 01-01-2015 31-12-9999
ມາດຕະການ
ມາດຕະການ, ກົດເບິ່ງລາຍລະອຽດດັ່ງຮູບ (ກ)
ນິຕິກຳ, ລາຍລະອຽດດັ່ງຮູບ (ຂ)
ສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ແບບອັດຕະໂນມັດ: ເຂົ້າ
ຕ້ອງມີໃບອະນຸຍາດ
ກະຊວງ ອຸດສາຫະກຳ ແລະ ການຄ້າ
31-12-9999
ຂັ້ນຕອນ
ຂັ້ນຕອນ, ລາຍລະອຽດ ດັ່ງຮູບ (ຄ)
ຍື່ນຂໍໃບອະນຸຍາດນຳເຂົ້າ/ສົ່ງອອກ (MOIC)
Import/Export
ເບິ່ງ



ກ່ຽວກັບພວກເຮົາ | ຕິດຕໍ່ສອບຖາມ | ຄຳຖາມທີ່ມັກຖາມເລື້ອຍໆ | ເວັບໄຊທ໌ອື່ນໆ

LTP Lao PDR Trade Portal

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສູນຂໍ້ມູນຂ່າວສານ ທາງດ້ານການຄ້າ

ໜ້າຫຼັກ | ກະດານຂ່າວ | ຖານຂໍ້ມູນ | ເອກະສານການຄ້າ | ຂໍ້ມູນເຂົ້າສູ່ຕະຫຼາດ | ສິດທິພິເສດດ້ານການຄ້າ

# ເບິ່ງມາດຕະການ

ຮູບພາບປະກອບ (ກ)

| | |
|---|---|
| **Name** | ຮຽກຮ້ອງໃຫ້ຂໍອະນຸຍາດສົ່ງ ອອກແບບອັດຕະໂນມັດ: ເຂົ້າ |
| **ເນື້ອໃນໂດຍຍໍ້** | ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດຈະຂັດ ຫລື ບໍ່ກໍ່ຕາມ ຕ້ອງໄດ້ຂໍອະນຸຍາດສົ່ງອອກຈາກພະແນກ ອຄ ແຂວງ ແລະ ນະຄອນຫຼວງ |
| **ຄວາມເຫັນ** | ເພື່ອເກັບກຳສະຖິຕິ ການສົ່ງອອກ |
| **ມີຜົນຕັ້ງແຕ່** | 01-03-2012 |
| **ມີຜົນຮອດ** | 31-12-9999 |
| **ການອ້າງອີງ** | ມາດຕາ 5 |
| **ລະຫັດວິຊາການ** | |
| **ກະຊວງ** | ກະຊວງ ອຸດສາຫະກຳ ແລະ ການຄ້າ |
| **ວັນທີສ້າງ** | 2012-02-09 18:06:19 |
| **ວັນທີປັບປຸງ** | 2015-07-29 15:03:29 |
| **ສະຖານະພາບ** | Active |
| **ປະເພດມາດຕະການ** | ຕ້ອງມີໃບອະນຸຍາດ |
| **ກົດໝາຍ** | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ |

## ຂັ້ນຕອນ

ສະແດງ 1-1 ຂອງ 1 ຜົນທີ່ໄດ້ຮັບ.

| ຫົວຂໍ້ ຂັ້ນຕອນ | ລາຍລະອຽດ | ປະເພດ | ລາຍລະອຽດ ຂອງຂັ້ນຕອນ ກັບແບບຟອມ ທີ່... |
|---|---|---|---|
| ຍື່ນຂໍໃບອະນຸຍາດ ນຳເຂົ້າ/ສົ່ງອອກ (ອຸດສາຫະກຳ ແລະ ການຄ້າ) | ການຍື່ນຂໍ ໃບອະນຸຍາດ ນຳເຂົ້າ/ສົ່ງອອກ ຈາກກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ | ການນຳເຂົ້າ/ສົ່ງອອກ | ເບິ່ງ |

**ມາດຕະການ ນີ້ຖືກນຳໃຊ້ໃນສິນຄ້າດັ່ງຕໍ່ໄປນີ້**

ສະແດງ 1-9 ຂອງ 9 ຜົນທີ່ໄດ້ຮັບ.

| ລະຫັດ HS Code | ລາຍລະອຽດ |
|---|---|
| 10061010 | - - ເໝາະສຳລັບການປູກຝັງ |
| 10061090 | - - ອື່ນໆ |
| 10062010 | - - ເຂົ້າຫອມໄຫມະລິ |
| 10063030 | - - ເຂົ້າຫອມ |
| 10063040 | - - ເຂົ້າຫອມໄຫມະລິ |
| 10063091 | - - - ເຂົ້າຈ້າວ |
| 10063099 | - - - ອື່ນໆ |
| 10064010 | - - ເໝາະສຳລັບການລ້ຽງສັດ |
| 10064090 | - - ອື່ນໆ |

ກະດານສົນທະນາ

ພື້ນທີ່ຂອງສະມາຊິກ

ອີເມວ *

ລະຫັດ *

ຈື່ຂໍ້ມູນໄວ້ຄັ້ງໜ້າ | ເຂົ້າລະບົບ

ສະໝັກ | ລືມລະຫັດ

ຄົ້ນຫາໃນເວັບໄຊ

ຄົ້ນຫາ

e-CO

SPS TBT ຈຸດສອບຖາມ

ຄູ່ມື ນຳເຂົ້າ ສົ່ງອອກ

ເຫດການທີ່ຈະມາເຖິງ

ເຫດການອື່ນໆ >>

ປະກາດຮັບສະໝັກງານ

See all drafts >>

ອັດຕາແລກປ່ຽນ

ອັດຕາແລກປ່ຽນ

LTP ວີດີໂອ | LTP ເຟສບຸກ

ແຜນຜັງເວັບໄຊທ໌ | ສຳລັບທົ່ວໄປ | ເງື່ອນໄຂ | ຕິດຕໍ່ພວກເຮົາ | ສິ່ງຄຳແນະນຳ | ຊ່ວຍເຫຼືອ

ສະຫງວນລິຂະສິດ © 2012 ກົມການນຳເຂົ້າແລະສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສູນຂໍ້ມູນຂ່າວສານ ທາງດ້ານການຄ້າ

ໜ້າຫຼັກ | ກະດານຂ່າວ | ຖານຂໍ້ມູນ | ເອກະສານການຄ້າ | ຂໍ້ມູນເຂົ້າສູ່ຕະຫຼາດ | ສິດທິພິເສດດ້ານການຄ້າ

## ລະບຽບການ

**ຫົວຂໍ້:** ເອກະສານ ຊ້ອນທ້າຍ ຂ ສິນຄ້າ ທີ່ຕ້ອງຂໍອະນຸຍາດສົ່ງອອກ ແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ

ເລກທີ 0076/ອຄ.ກຂອ

**ປະເພດ ເອກະສານ:** ແຈ້ງການ

**ອອກໂດຍ:** ກະຊວງ ອຸດສາຫະກໍາ ແລະ ການຄ້າ

**ເບິ່ງແຍງໂດຍ:** ກະຊວງ ອຸດສາຫະກໍາ ແລະ ການຄ້າ

**ອອກວັນທີ :** 13-01-2012

ຮູບພາບປະກອບ (ຂ)

## ສາລະບານ

I. ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບອັດຕະໂນມັດ

II. ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບບໍ່ອັດຕະໂນມັດ

ເອກະສານຊ້ອນທ້າຍ ກ ສິນຄ້າທີ່ຕ້ອງຂໍອະນຸຍາດນໍາເຂົ້າແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ

ແຈ້ງການ ວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນໍາເຂົ້າ ຫຼື ສົ່ງອອກ ແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ

**ເອກະສານຊ້ອນທ້າຍ ຂ**

**ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ**

**I. ສິນຄ້າທີ່ຕ້ອງຂໍອະນຸຍາດສົ່ງອອກແບບອັດຕະໂນມັດ**

| ລ/ດ | ລະຫັດ ສິນຄ້າ | ລາຍການສິນຄ້າ | ເຫດຜົນ | ຂະແໜງການອອກ ອະນຸຍາດ |
|---|---|---|---|---|
| 1. | 4403<br>4407.10-4407.28<br>0601 | ໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ແປຮູບ ແລະ ໄມ້ເຄິ່ງສໍາເລັດຮູບ ຈາກສວນໄມ້ປູກ | ເພື່ອຕິດຕາມກວດກາຄວາມສອດຄ່ອງຂອງການລິເລີ່ມນໍາໃຊ້ລະບົບ ການຄຸ້ມຄອງໄມ້ແບບຕ່ອງໂສ້ (CoC) | ກະຊວງອຸດສາຫະກໍາ ແລະ ການຄ້າ<br>(ກົມການນໍາເຂົ້າ ແລະ ສົ່ງອອກ) |
| 2. | 1006 | ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດຈະຂັດ ຫລື ບໍ່ກໍຕາມ | ເພື່ອເກັບກໍາສະຖິຕິການສົ່ງອອກ | ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫລວງ |
| 3. | 2601-2617 | ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ | ເພື່ອປົກປັກຮັກສາຊັບພະຍາກອນທໍາມະຊາດ | ກະຊວງພະລັງງານ ແລະ ບໍ່ແຮ່<br>(ກົມບໍ່ແຮ່) |

ແຜນຜັງເວັບໄຊທ໌ | ຄໍາສັບທົ່ວໄປ | ເງື່ອນໄຂ | ຕິດຕໍ່ພວກເຮົາ | ສິ່ງຄໍາແນະນໍາ | ຊ່ວຍເຫຼືອ

ສະຫງວນລິຂະສິດ © 2012 ກົມການນໍາເຂົ້າແລະສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ.

ກ່ຽວກັບພວກເຮົາ | ຕິດຕໍ່ສອບຖາມ | ຄຳຖາມທີ່ມັກຖາມເລື້ອຍໆ | ເວັບໄຊທ໌ອື່ນໆ

LTP Lao PDR Trade Portal

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສູນຂໍ້ມູນຂ່າວສານ ທາງດ້ານການຄ້າ

ໜ້າຫຼັກ | ກະດານຂ່າວ | ຖານຂໍ້ມູນ | ເອກະສານການຄ້າ | ຂໍ້ມູນເຂົ້າສູ່ຕະຫຼາດ | ສິດທິພິເສດດ້ານການຄ້າ

ໜ້າຫຼັກ » ຄົ້ນຫາ ຂັ້ນຕອນ » ລາຍລະອຽດຂອງຂັ້ນຕອນ

ຮູບພາບປະກອບ (ຄ/1)

# ລາຍລະອຽດຂອງຂັ້ນຕອນ

| | |
|---|---|
| **ຫົວຂໍ້ ຂະບວນການ** | ຍື່ນຂໍໃບອະນຸຍາດ ນຳເຂົ້າ/ສົ່ງອອກ (ອຸດສາຫະກຳ ແລະ ການຄ້າ) |
| **ລາຍລະອຽດ** | ລະບຽບການນີ້ຖືກນຳໃຊ້ ເພື່ອຂໍເອົາໃບອະນຸຍາດນຳເຂົ້າ/ສົ່ງອອກ ຈາກກົມການນຳເຂົ້າ ແລະ ສົ່ງອອກ (DIMEX/MOIC) ສຳລັບສິນຄ້າທີ່ຕ້ອງການໄດ້ຮັບ ໃບອະນຸຍາດນຳເຂົ້າ/ສົ່ງອອກ.<br>ໃບອະນຸຍາດນຳເຂົ້າ/ສົ່ງອອກອາດເປັນແບບອັດຕະໂນມັດ ຫຼື ບໍ່ອັດຕະໂນມັດ. ໃບອະນຸຍາດແບບອັດຕະໂນມັດ ຈະຖືກອອກໃຫ້ໃນທຸກໆກໍລະນີ ໂດຍມີເງື່ອນໄຂວ່າຂໍ້ກຳນົດດ້ານລະບຽບກົດໝາຍ ປົກກະຕິຖືກຕອບສະໜອງໄດ້. ໃບອະນຸຍາດແບບບໍ່ອັດຕະໂນມັດອາດຈະຖືກອອກໃຫ້ ໂດຍຂຶ້ນກັບການພິຈາລະ ນາຂອງ DIMEX. ໂດຍປົກກະຕິແລ້ວ ນີ້ແມ່ນໃນເວລາທີ່ກ່ຽວຂ້ອງກັບໂຄຕ້າການນຳເຂົ້າ.<br>ຂະບວນການຂັ້ນຕອນໃນການຂໍອະນຸຍາດແມ່ນຄືກັນ ຍົກເວັ້ນແຕ່ເອກະສານທີ່ຕ້ອງຍື່ນປະກອບນັ້ນ ອາດຈະແຕກຕ່າງກັນແດ່ ລະຫວ່າງການນຳເຂົ້າກັບ ການສົ່ງອອກ.<br>ກະລຸນາເບິ່ງ *ດຳລັດວ່າດ້ວຍການນຳເຂົ້າ-ສົ່ງອອກ ເລກທີ 114* ສຳລັບກົດລະບຽບທີ່ຄວບຄຸມການອອກໃບອະນຸຍາດນຳເຂົ້າ. |



**ຮູບພາບປະກອບ (ຄ/2)**

**Note 1**

ໃບສະເໜີຂຽນຂຶ້ນເອງໄດ້ ແຕ່ມີຊ່າງຢູ່ກົມການນຳເຂົ້າ ແລະ ສົ່ງອອກຢູ່ ກະລຸນາ *ກົດທີ່ນີ້* ເພື່ອເບິ່ງຕົວຢ່າງ.

**Note 2**

ເອກະສານທີ່ຈຳເປັນໃນການຍື່ນ ເພື່ອໃຫ້ໄດ້ໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກນັ້ນອາດຈະມີຄວາມແຕກຕ່າງໄປຕາມສິນຄ້າ ແລະ ບາງກໍລະນີອາດຈະຕ້ອງ ໄດ້ຂໍຈາກກະຊວງ ຫຼື ໜ່ວຍງານອື່ນກໍເປັນໄດ້. *ກົດທີ່ນີ້* ເພື່ອກວດກາເບິ່ງບັນດາຂໍ້ກຳນົດທີ່ກ່ຽວຂ້ອງ ກັບລາຍການສິນຄ້າສະເພາະ ຫຼື ວ່າທ່ານອາດຈະເບິ່ງ ລາຍລະອຽດ ສຳລັບແຕ່ລະປະເພດສິນຄ້າດັ່ງຕໍ່ໄປນີ້ກໍໄດ້.

- ***ການນຳເຂົ້າຊີມັງ ເພື່ອຮັບໃຊ້ໂຄງການ***
  ທ່ານຕ້ອງໄດ້ແຈ້ງແຜນການນຳເຂົ້າປະຈຳປີ ພ້ອມກັບເອກະສານອະນຸຍາດຈາກ ກະຊວງແຜນການ ແລະ ການລົງທຶນຕໍ່ກັບກົມການນຳເຂົ້າ ແລະ ສົ່ງອອກ. ກົດທີ່ນີ້ ເພື່ອກວດເບິ່ງຂະບວນການຂັ້ນຕອນໃນການຂໍໃບອະນຸຍາດດັ່ງກ່າວນີ້.

- ***ການນຳເຂົ້າເຫຼັກ ເພື່ອຮັບໃຊ້ໂຄງການ***
  ທ່ານຕ້ອງໄດ້ແຈ້ງແຜນການນຳເຂົ້າປະຈຳປີ ພ້ອມກັບເອກະສານອະນຸຍາດຈາກ ກະຊວງແຜນການ ແລະ ການລົງທຶນຕໍ່ກັບກົມການນຳເຂົ້າ ແລະ ສົ່ງອອກ. *ກົດທີ່ນີ້* ເພື່ອກວດເບິ່ງຂະບວນການຂັ້ນຕອນໃນການຂໍໃບອະນຸຍາດດັ່ງກ່າວນີ້.

- ***ການນຳເຂົ້າເພັດ***
  ໃນການນຳເຂົ້າ ຫຼື ສົ່ງອອກເພັດ ຕ້ອງໄດ້ແຈ້ງເອກະສານອ້າງອີງທີ່ສາມາດພິສູດແຫຼ່ງທີ່ມາຂອງເພັດໄດ້ ຕໍ່ກັບກົມການນຳເຂົ້າ ແລະ ສົ່ງອອກ. ເອກະສານເຫຼົ່ານີ້ໄດ້ລະບຸໄວ້ໃນ ຂໍ້ຕົກລົງເລກທີ 0224/ອຄ.ກຂອ.

- ***ການນຳເຂົ້າ ຫຼື ການສົ່ງອອກຜະລິດຕະພັນໄມ້***
  ໃນການສະເໜີຂໍໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ ທີ່ບອນຢູ່ໃນບັນຊີແບບບໍ່ອັດຕະໂນມັດ (ເອກະສານ ແຈ້ງການເລກທີ 0076/ອຄກ.ຂອ) ຜູ້ສົ່ງອອກຕ້ອງໄດ້ແຈ້ງເອກະສານຕ່າງໆເຊັ່ນ: ສັນຍາຊື້ຂາຍໄມ້, ບັນຊີໄມ້ (log list), ໃບຮັບເງິນຄ່າພັນທະໄມ້.

  ໃນການສະເໜີຂໍໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ ທີ່ບອນຢູ່ໃນບັນຊີແບບອັດຕະໂນມັດ (ເອກະສານ ແຈ້ງການເລກທີ 0076/ອຄກ.ຂອ) ຜູ້ສົ່ງອອກຕ້ອງໄດ້ແຈ້ງເອກະສານຕ່າງໆເຊັ່ນ: ສັນຍາຊື້ຂາຍໄມ້, ໜັງສືຢັ້ງຢືນແຫ່ງທີ່ມາຂອງໄມ້ ຈາກກະຊວງກະສິກຳ ແລະ ປ່າໄມ້, ບັນຊີໄມ້ (log list) ແລະ ໃບຕິດຕາມຕີກາປ່ອຍໄມ້.

  ໃນການສະເໜີຂໍໃບອະນຸຍາດນຳເຂົ້າຜະລິດຕະພັນໄມ້ ທີ່ບອນຢູ່ໃນບັນຊີແບບອັດຕະໂນມັດ (ເອກະສານ ແຈ້ງການເລກທີ 0076/ອຄກ.ຂອ) ຜູ້ນຳເຂົ້າຕ້ອງໄດ້ແຈ້ງເອກະສານອະນຸຍາດສົ່ງອອກ ຈາກປະເທດສົ່ງອອກ, ເອກະສານຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບສະເໜີລາຄາ ແລະ/ຫຼື ສັນຍາຊື້ຂາຍພ້ອມທັງລາຍການສິນຄ້າ.

- ***ການນຳເຂົ້າຍານພາຫານະເຫີງບິນ ສຳລັບຮັບໃຊ້ໂຄງການ***
  ຜູ້ນຳເຂົ້າຕ້ອງໄດ້ແຈ້ງໃບສະເໜີລາຄາ ສຳລັບຍານພາຫານະທີ່ຈະນຳເຂົ້າ ແລະ ໜັງສືອະນຸຍາດ ຈາກກະຊວງແຜນການ ແລະ ການລົງທຶນຕໍ່ກັບ ກົມການນຳເຂົ້າ ແລະ ສົ່ງອອກ. ກົດທີ່ນີ້ ເພື່ອກວດກາເບິ່ງຂະບວນການຂັ້ນຕອນໃນການຂໍໜັງສືດັ່ງກ່າວນີ້.

- ***ການນຳເຂົ້າຜະລິດຕະພັນນ້ຳມັນເຊື້ອໄຟ ສຳລັບຮັບໃຊ້ໂຄງການ***
  ຜູ້ນຳເຂົ້າຕ້ອງໄດ້ຍື່ນເອກະສານທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ ຈາກກະຊວງແຜນການ ແລະ ການລົງທຶນ ໃຫ້ແກ່ກົມການນຳເຂົ້າ ແລະ ສົ່ງອອກ. ກົດທີ່ນີ້ ເພື່ອກວດເບິ່ງຂັ້ນຕອນດັ່ງກ່າວ. ຜູ້ນຳເຂົ້າຍັງຕ້ອງໄດ້ຍື່ນປຶ້ມຕິດຕາມການນຳເຂົ້າແຕ່ລະຄັ້ງ ຫຼື ໃບຢັ້ງຢືນຈາກເຈົ້າໜ້າທີ່ດ່ານເພື່ອປຽບທຽບ ການນຳເຂົ້າຕົວຈິງກັບແຜນການນຳເຂົ້າ. ໃນກໍລະນີຂອງການນຳເຂົ້າ ເພື່ອຮັບໃຊ້ໂຄງການແມ່ນບໍ່ຈຳເປັນຕ້ອງຍື່ນໃບແຈ້ງເສຍອາກອນ.

- ***ການນຳເຂົ້າຜະລິດຕະພັນອາຍກາສ ເພື່ອຮັບໃຊ້ໂຄງການ***
  ຜູ້ນຳເຂົ້າຕ້ອງໄດ້ຍື່ນເອກະສານອະນຸມັດ ທີ່ອອກໂດຍກະຊວງແຜນການ ແລະ ການລົງທຶນໃຫ້ກັບກົມການນຳເຂົ້າ ແລະ ສົ່ງອອກ. ກົດທີ່ນີ້ ເພື່ອກວດເບິ່ງຂັ້ນຕອນການຍື່ນເອກະສານດັ່ງກ່າວ. ຜູ້ນຳເຂົ້າຍັງຕ້ອງໄດ້ຍື່ນປຶ້ມຕິດຕາມການນຳເຂົ້າແຕ່ລະຄັ້ງ ຫຼື ໃບຢັ້ງຢືນຈາກເຈົ້າໜ້າທີ່ ດ່ານເພື່ອປຽບທຽບການນຳເຂົ້າຕົວຈິງກັບແຜນການນຳເຂົ້າ. ໃນກໍລະນີຂອງການນຳເຂົ້າເພື່ອຮັບໃຊ້ໂຄງການແມ່ນບໍ່ຈຳເປັນຕ້ອງຍື່ນໃບແຈ້ງເສຍອາກອນ.

**Note 3**

ຊື້ແບບຟອມການນຳເຂົ້າໄດ້ທີ່ພະແນກການເງິນ ໃນລາຄາ 10,000 ກີບ ຈາກກະຊວງອຸດສາຫະກຳ ແລະ ການຄ້າ.

**Note 4**

ຮູບແບບຂອງໃບອະນຸຍາດນຳເຂົ້າອາດຈະແຕກຕ່າງກັນໄປ ຕາມປະເພດຂອງຜະລິດຕະພັນ.

**Note 5**

ຜູ້ນຳເຂົ້າ ແລະ ສົ່ງອອກ ສາມາດດຳເນີນການຕາມຂະບວນການປົກກະຕິ ໃນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ.

*ກົດທີ່ນີ້* ເພື່ອກວດເບິ່ງຂັ້ນຕອນການນຳເຂົ້າຢູ່ດ່ານທ່ານາແລ້ງ ຫຼື *ທີ່ນີ້* ສຳລັບຂັ້ນຕອນການນຳເຂົ້າທົ່ວໄປຢູ່ຕາມດ່ານຕ່າງໆ.

*ກົດທີ່ນີ້* ເພື່ອກວດເບິ່ງຂັ້ນຕອນການສົ່ງອອກຢູ່ດ່ານທ່ານາແລ້ງ ຫຼື *ທີ່ນີ້* ສຳລັບຂັ້ນຕອນການສົ່ງອອກທົ່ວໄປຢູ່ຕາມດ່ານຕ່າງໆ.

| | |
|---|---|
| **ປະເພດ** | Import/Export |

ຂັ້ນຕອນນີ້ ມີແບບຟອມກ່ຽວຂ້ອງດັ່ງນີ້

ຮູບພາບປະກອບ (ຄ/3)

| ຊື່ແບບຟອມ | ລາຍລະອຽດ | ວັນທີລົງ | ວັນທີ ປັບປຸງ | ອອກໂດຍ | ດາວໂຫຼດ |
|---|---|---|---|---|---|
| ຄໍາຮ້ອງ ຂໍໃບອະນຸຍາດ ນໍາເຂົ້າ ສິນຄ້າ | ນີ້ແມ່ນແບບຟອມຕົວຢ່າງ ທີ່ຜູ້ນໍາເຂົ້າ ສາມາດໃຊ້ເປັນບ່ອນອ້າງອີງ ໃນເວລາກຽມ ໃບຄໍາຮ້ອງຂອງຕົນເອງ | 25-01-2012 | 20-06-2012 | ກະຊວງ ອຸດສາຫະກໍາ ແລະ ການຄ້າ | |

ຂັ້ນຕອນນີ້ໃຊ້ກັບມາດຕະການລຸ່ມນີ້

ແບບຟອມຈະຕ້ອງໃຊ້ໃນຂັ້ນຕອນນີ້ ກົດໃສ່ທີ່ນີ້ ເຂົ້າເບິ່ງ ຫຼື ດາວໂຫຼດ ດັ່ງຮູບ (ງ)

| Name | ປະເພດ ມາດຕະ | ກະຊວງ | ເນື້ອໃນໂດຍຍໍ້ | ຄວາມເຫັນ | ລະບຽບການ | ມີຜົນຮອດ |
|---|---|---|---|---|---|---|
| ຕ້ອງຂໍອະນຸຍາດນໍາເຂົ້າ : ພາຫະນະທາງບົກ ທຸກປະເພດ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ພາຫະນະທາງບົກ ທຸກປະເພດທີ່ແລ່ນດ້ວຍ ເຄື່ອງຈັກ, ຍົກເວັ້ນລົດສາມລໍ້ (8701.20; 8701.30.20; 8701.90; 8702; 8703; 8704; 8705 and 8711) ຕ້ອງໄດ້ຮັບອະນຸຍາດນໍາເຂົ້າຈາກກົມ ກຂອ, ກະຊວງ ອຄ ແລະ ຕ້ອງໄດ້ຕາມເງື່ອນໄຂທີ່ລະບຸໂດຍກະຊວງ ໂຍທາທິການ ແລະ ຂົນສົ່ງ | ເພື່ອເກັບກໍາສະຖິຕິ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ການຈໍາໜ່າຍ ລົດ ຢູ່ ສປປ ລາວ ເລກທີ 0075/ອຄ.ກຂອ | 31-12-9999 |
| ຮຽກຮ້ອງໃຫ້ຂໍອະນຸຍາດນໍາເຂົ້າ ອາຍແກັສ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ການນໍາເຂົ້າອາຍແກັສຈໍາເປັນຕ້ອງໄດ້ຂໍອະນຸຍາດນໍາເຂົ້າຈາກກົມການນໍາເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກໍາ ແລະ ການຄ້າ ບົນພື້ນຖານຜ່ານການຢັ້ງຢືນຈາກ ກົມການຄ້າພາຍໃນ ກ່ຽວກັບພື້ນຖານໂຄງລ່າງ ແລະ ການເຄື່ອນໄຫວດໍາເນີນທຸລະກິດ | ເພື່ອເກັບກໍາສະຖິຕິ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ຈໍາໜ່າຍ ອາຍແກັສ ຢູ່ ສປປ ລາວ ເລກທີ 0238/ອຄ.ກຂອ | 31-12-9999 |
| ຕ້ອງຂໍອະນຸຍາດນໍາເຂົ້າ: ໄມ້ຊອນ, ໄມ້ທ່ອນ, ແລະ ອື່ນໆ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ໄມ້ຊອນ, ໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ໄມ້ແປຮູບ ທີ່ນໍາເຂົ້າມາ ຕ້ອງໄດ້ຮັບອະນຸຍາດນໍາເຂົ້າຈາກກົມ ກຂອ, ກະຊວງ ອຄ | ເພື່ອເກັບກໍາສະຖິຕິ ໃນການນໍາເຂົ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ຈໍາໜ່າຍ ໄມ້ ເລກທີ 0451/ອຄ.ກຂອ | 31-12-9999 |
| ຮຽກຮ້ອງໃຫ້ຂໍອະນຸຍາດນໍາເຂົ້າ: ເຂົ້າທີ່ຍັງບໍ່ໄດ້ສີ ແລະ ອື່ນໆ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ການນໍາເຂົ້າ ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີ ເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດ ຈະຂັດ ຫຼື ບໍ່ກໍຕາມ ຕ້ອງໄດ້ຮັບອະນຸຍາດຈາກ ພະແນກ ອຄ ແຂວງ ແລະ ນະຄອນຫຼວງ | ເພື່ອເກັບກໍາສະຖິຕິ ໃນການນໍາເຂົ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ | 31-12-9999 |
| ຮຽກຮ້ອງໃຫ້ຂໍອະນຸຍາດນໍາເຂົ້າ: ເຫຼັກເສັ້ນ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ເຫຼັກເສັ້ນ ແລະ ເຫຼັກຮູບປະພັນ ຕ້ອງໄດ້ຮັບອະນຸຍາດນໍາເຂົ້າ ຈາກພະແນກ ອຄ ແຂວງ ແລະ ນະຄອນຫຼວງ | ເພື່ອເກັບກໍາສະຖິຕິ ໃນການນໍາເຂົ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ຈໍາໜ່າຍເຫຼັກ ແລະ ຊີມັງ ເລກທີ 0450/ອຄ.ກຂອ | 31-12-9999 |
| ຮຽກຮ້ອງໃຫ້ມີການຂໍອະນຸຍາດນໍາເຂົ້າ: ຊີມັງ, ມໍທາຣ, ຄອນກຣີດ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ຊີມັງ, ມໍທາຣ, ຄອນກຣີດ ຕ້ອງໄດ້ອະນຸຍາດນໍາເຂົ້າຈາກພະແນກ ອຄ ແຂວງ ແລະ ນະຄອນຫຼວງ | ເພື່ອເກັບກໍາສະຖິຕິ ໃນການນໍາເຂົ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ຈໍາໜ່າຍເຫຼັກ ແລະ ຊີມັງ ເລກທີ 0450/ອຄ.ກຂອ | 31-12-9999 |
| ຮຽກຮ້ອງໃຫ້ຂໍອະນຸຍາດສົ່ງອອກແບບອັດຕະໂນມັດ: ເຂົ້າ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດຈະຂັດ ຫລື ບໍ່ ກໍ່ຕາມ ຕ້ອງໄດ້ຮັບອະນຸຍາດສົ່ງອອກຈາກພະແນກ ອຄ ແຂວງ ແລະ ນະຄອນຫຼວງ | ເພື່ອເກັບກໍາສະຖິຕິ ການສົ່ງອອກ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນໍາເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ | 31-12-9999 |
| ຮຽກຮ້ອງໃຫ້ຂໍອະນຸຍາດສົ່ງອອກແບບບໍ່ອັດຕະໂນມັດ: ໄມ້ເຄິ່ງສໍາເລັດຮູບ | ຕ້ອງມີໃບອະນຸຍາດ | ກະຊວງ ອຸດສາຫະກໍາ ແລະ ການຄ້າ | ໄມ້ເຄິ່ງສໍາເລັດຮູບ (ດັ່ງທີ່ໄດ້ລະບຸໄວ້ໃນຕາຕະລາງຊ້ອນທ້າຍ 2 ຂອງຂໍ້ຕົກລົງ ວ່າດ້ວຍຜະລິດຕະພັນໄມ້ ເລກທີ 2005/ອຄ. ກອຫ, ລົງວັນທີ 28 ກັນຍາ 2015) ຈາກປ່າທໍາມະຊາດ ຕ້ອງໄດ້ຍື່ນໃບສະເໜີຫາກົມ ຂອ ເພື່ອລາຍງານຫາລັດຖະບານພິຈາລະນາເຫັນດີໃຫ້ສົ່ງອອກ, ຈາກນັ້ນລັດຖະບານຈະນໍາສົ່ງເອກະສານອະນຸມັດຫາກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງ ອຄ. ພາຍຫຼັງໄດ້ຮັບເອກະສານ, ກົມ ຂອ ຈະເຊັດໜັງສື ຄັດຕິດກັບເອກະສານອະນຸມັດຫາພະແນກ ອຄ ແຂວງ ແລະ ນະຄອນຫຼວງ ເພື່ອອອກໃບອະນຸຍາດສົ່ງອອກ | ເພື່ອຕິດຕາມກວດກາ ຄວາມສອດຄ່ອງຂອງ ການລິເລີ່ມນໍາໃຊ້ ລະບົບການຄຸ້ມຄອງ ໄມ້ແບບຕ່ອງໂສ້ (CoC). ແລະ ຄຸ້ມຄອງ, ຕິດຕາມ ທຸລະກິດສົ່ງອອກໄມ້ໃຫ້ປະຕິບັດຕາມລະບຽບການທີ່ວາງອອກ ແນໃສ່ປົກປັກຮັກສາຊັບພະຍາກອນປ່າໄມ້ໃຫ້ມີຄວາມອຸດົມສົມບູນ | ຄໍາສັ່ງແນະນໍາ ເພີ່ມເຕີມ ກ່ຽວກັບ ຜະລິດຕະພັນໄມ້ ເຄິ່ງສໍາເລັດຮູບທີ່ສາມາດສົ່ງອອກ ໄປຕ່າງປະເທດໄດ້ ສະບັບເລກທີ 2156/ອຄ. ກຂອ, ລົງວັນທີ 19 ຕຸລາ 2015 | 31-12-9999 |

ໜ້າທໍາອິດ ໜ້າກ່ອນ 1 2 ໜ້າຕໍ່ໄປ ໜ້າສຸດທ້າຍ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ຜູ້ຮ້ອງຂໍ: ເລກທີ:................/.........

ທີ່ຢູ່:

ຂໍ້ມູນຕິດຕໍ່ຂອງຜູ້ຮ້ອງຂໍ:

## <u>ຄຳຮ້ອງຂໍໃບອະນຸຍາດນຳເຂົ້າສິນຄ້າ</u>

ເຖິງ: ທ່ານຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ,

ກະຊວງອຸດສາຫະກຳ ແລະ ການຄ້າ

ເລື່ອງ: ສະເໜີຂໍນຳເຂົ້າ ..........................................................................

- ອີງຕາມໃບທະບຽນວິສາຫະກິດເລກທີ: ....................................., ວັນທີ ..................................

ຂ້າພະເຈົ້າ, ຕາງໜ້າໃຫ້ ..............(ຊື່ບໍລິສັດ)................................................ ຂໍຖືເປັນກຽດສະເໜີມາຍັງ ທ່ານ

ເພື່ອອອກໃບອະນຸຍາດນຳເຂົ້າ ..............(ຊື່ສິນຄ້າ).................... ຈາກ ..............(ປະເທດສົ່ງອອກ)..............

ໂດຍຜ່ານດ່ານ .......(ຊື່ດ່ານທີ່ນຳເຂົ້າ).................. ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

| ລ/ດ | ເນື້ອໃນລາຍການ | ລະຫັດເຄົ້າພາສີ | ຍີ່ຫໍ້ | ຈຳນວນ | ມູນຄ່າ | ລວມ |
|---|---|---|---|---|---|---|
| 1. | | | | | | |
| 2. | | | | | | |
| 3. | | | | | | |
| | ລວມ | | | | | |

ສະນັ້ນ, ຈຶ່ງເຮັດໃບສະເໜີຮຽນມາຍັງ ທ່ານ ຫວັງວ່າທ່ານຄົງຈະພິຈາລະນາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ທີ່ ........................., ວັນທີ...................

ເຊັນຜູ້ຮ້ອງຂໍ

(ເຊັນ ແລະ ປະທັບຕາ)

ຈັດພິມໂດຍ:

ກົມການນຳເຂົ້າ ແລະ ສົ່ງອອກ,

ກະຊວງອຸດສາຫະກຳ ແລະ ການຄ້າ

ຖະໜົນໂພນໄຊ, ເມືອງໄຊເສດຖາ, ຕູ້ ປນ 4107, ນະຄອນຫຼວງວຽງຈັນ

ໂທ/ແຟັກ: +85621 454224

ອີເມລ໌: webmaster@laotradeportal.gov.la

enquiries@laotradeportal.gov.la

ຈັດພິມຄັ້ງທີສອງ ກັນຍາ 2016